**<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>**

**Copyright © 2014 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher BAPTISTWAY PRESS®: Scott Stevens

Language Materials Team

Teaching Procedures Writer for Lesson 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3,
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 7, 8, 9
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 10, 11, 12, 13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10, 11, 12, 13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 1

# ຄວາມຢ້ານກົວຄືຜົນຂອງການພາດລົ້ມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປະຖົມມະການ 3:1-19

**ພູມຫລັງຂອງພຣະຄັມພີ:** ປະຖົມມະການ ບົດທີ 2 ແລະ 3

**ຈຸດສຳຄັນຂອງບົດຮຽນນີ້:** ການພາດລົ້ມຂອງມະນຸດຄືການຕ້ອນຮັບເອົາຄວາມບາບແລະຮັບເອົາຄວາມຢ້ານກົວເຂົ້າມາໃນໂລກ

**ຄຳຖາມເພື່ອການຄົ້ນຄວ້າ:** ຄວາມຢ້ານກົວເຂົ້າມາໃນໂລກນີ້ໄດ້ຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຊີ້ແຈງໃຫ້ພວກເຮົາເຂົ້າໃຈວ່າ ຄວາມຢ້ານກົວແມ່ນຜົນທີ່ ຕາມມາຂອງການພາດລົ້ມຂອງມະນຸດ.

## ແຜນການສິດສອນສຳລັບຄຣູ

## ນຳເຣື່ອງເຂົ້າສູ່ຊີວິດຈິງ(ໃຊ້ເວລາ 5 ນາທີ

1. ເອົາເຈັ້ຍຂາວໃຫຍ່ແຜ່ນນຶ່ງຕິດໃສ່ຝາຫ້ອງຮຽນ. ໃນເວລານັກຮຽນມາເຖິງ,ແນະນຳໃຫ້ພວກເຂົາເຈົ້າມາຂຽນລົງກະດານວ່າ ໃນເວລາເປັນເດັກນ້ອຍມີອັນໃດທີ່ຢ້ານຫລາຍກວ່າໝູ່. ເບິ່ງຄືນຂອງແຕ່ລະຄົນ. ຖາມ: ແມ່ນຫຍັງເກີດຂຶ້ນຈຶ່ງຢ້ານ? ຄຣູຈະເວົ້າວ່າພວກເຮົາກໍເປັນຄືກັນທຸກຄົນ.ເມື່ອພວກເຮົາໃຫຍ່ຂຶ້ນມາຄວາມຢ້ານກົວກໍປ່ຽນແປງໄປ, ແຕ່ຄວາມຢ້ານກໍຍັງຢູ່ກັບພວກເຮົາຢູ່. ບົດຮຽນໃນວັນນີ້ແມ່ນບົດຮຽນທຳອິດທີ່ກ່ຽວກັບຄວາມຢ້ານ. ຄວາມຢ້ານກົວເຂົ້າມາໃນໂລກນີ້ໄດ້ຢ່າງໃດ?

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ໃຫ້ນັກຮຽນຄົນນຶ່ງເວົ້າເຖິງສວນເອເດນກ່ອນຄວາມບາບເຂົ້າມາໃນໂລກນີ້ ບັລຍາຍເຖິງຄວາມຮູ້ສຶກ, ຄວາມສັມພັນກັບພຣະເຈົ້າ, ແລະຄວາມມີອິສລະພາບທາງຝ່າຍຈິດວິນຍານ. ອາດາມແລະເອວາມີຄວາມຊົມຊື່ນຍິນດີຫລາຍ.ພຣະທັມປະຖົມມະການບົດທີສອງໄດ້ກ່າວໄວ້ໃນຕອນທ້າຍໆ. ທັງສອງຢູ່ໃນສວນເໝືອນຢູ່ໃນແຜ່ນດິນສວັນ. ບໍ່ມີຄວາມບາບແລະບໍ່ມີການຕັດສິນໃດໆທັງສິ້ນ. ແຕ່ເມື່ອມາເຖິງບົດທີສາມ ທຸກຢ່າງປ່ຽນແປງໄປຢ່າງໄວວາ.

3. ໃຫ້ຄົນນຶ່ງທີ່ສມັກໃຈອ່ານ ປະຖົມມະການບົດທີ 3:1-7. ບອກໃຫ້ທຸກຄົນຕັ້ງໃຈຟັງ ວ່າແມ່ນຫຍັງຈະເກີດຂຶ້ນ. ໃຫ້ຄຣູອະທິບາຍເຖິງຄຳວ່າ ເປືອຍກາຍຢູ່ໃນປະຖົມມະການ 3:7 ແລະຄຳວ່າເປືອຍກາຍໃນປະຖົມມະການ 2:25. ສັ້ນໆພໍເຂົ້າໃຈ. ແລະໃຫ້ເວົ້າເຖິງແຜ່ນດິນສວັນດ້ວຍ. ຖາມ: ທ່ານຄິດຢ່າງໃດກ່ຽວກັບຄວາມຢ້ານກົວໄດ້ເຂົ້າມາໃນໂລກຄັ້ງທຳອິດ? ໃຫ້ໂອກາດແກ່ພວກນັກຮຽນຕອບ.

4. ອ່ານດັງໆ ຂໍ້ 8 ເຖິງຂໍ້ 13 ແລ້ວນຳພານັກຮຽນຕອບຄຳຖາມຕໍ່ໄປນີ້:
   - ພຣະເຈົ້າມີຄວາມສັມພັນຢ່າງໃດກັບມະນຸດຄູ່ແລກ?
   - ເປັນຫຍັງອາດາມເອວາຈຶ່ງຫລົບລີ້ຈາກພຣະເຈົ້າ?
   - ພວກທ່ານຮູ້ບໍ່ວ່າ ພວກເຂົາຈະພົ້ນຈາກສາຍຕາຂອງພຣະເຈົ້າບໍ?
   - ພຣະເຈົ້າຖາມມະນຸດຄູ່ແລກວ່າແນວໃດ? ເປັນຫຍັງພຣະເຈົ້າຈຶ່ງຖາມຢ່າງນັ້ນ?
   - ຖ້ອຍຄຳທີ່ສຳຄັນໃນຂໍ້ 10 ແມ່ນຄຳໃດ? "ຢ້ານກົວ"
   - ພຣະເຈົ້າຖາມຄົນທັງສອງວ່າຢ່າງໃດ?ໃນຂໍ້ທີ 11. ພວກທ່ານຈະອ່ານຄວາມຮູ້ສຶກໄດ້ຢ່າງໃດ?
   - ອາດາມຕອບພຣະເຈົ້າວ່າຢ່າງໃດ? ເອວາເດຕອບພຣະເຈົ້າວ່າຢ່າງໃດ?
   - ແມ່ນຫຍັງຄືຄຳຖາມທີ່ພຣະເຈົ້າເຈາະຈີ້ມລົງໄປອີກ? ໃນຂໍ້ 13. ພວກທ່ານຈະອ່ານຄວາມຮູ້ສຶກນັ້ນຢ່າງໃດ?

5. ຕົ້ນໆ ອາທິດໃຫ້ຕຽມຄົນທີ່ຄົ້ນຄວ້າ ປະຖົມມະການ 3:14-19 ແລ້ວກໍໃຫ້ຕຽມການກ່າວອະທິບາຍຄວາມສັ້ນໆພຣະເຈົ້າເວົ້າຢ່າງໃດແດ່? ໃຫ້ໃຊ້ການອະທິບາຍພຣະຄັມພີໄປດ້ວຍ. ສົນທະນາກັບຫ້ອງຮຽນວ່າການຕັດສິນນີ້ເປັນຢ່າງໃດ?

## <u>**ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)**</u>

6. ຖາມ: ມີຄວາມຢ້ານກົວອັນໃດບໍ ທີ່ຕິດຕາມພວກເຮົາມາ ? ສົນທະນາໄປໃນທາງລົບແລະທາງບວກດ້ວຍ.

7. ນຳພາອ້ອນວອນອະທິຖານປິດ

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 2

# ຈົ່ງຮັບຜິດຊອບຕໍ່ຄຳສັ່ງຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ອົບພະຍົບ 3:7-15 4:1-17

**ພູມຫລັງຂອງພຣະຄັມພີ**: ອົບພະຍົບ ບົດທີ 3 ແລະ 4

**ຈຸດສຳຄັນສຳລັບບົດຮຽນນີ້:** ພຣະເຈົ້າຈັດຕຽມພວກເຮົາເພື່ອປະຕິບັດຕາມຄຳສັ່ງຂອງພຣະອົງ ດ້ວຍການນຳພາແລະດ້ວຍອຳນາດຂອງພຣະອົງ

**ຄຳຖາມເພື່ອການຄົ້ນຄວ້າ**: ພວກເຮົາຈະໝັ້ນໃຈໄດ້ຢ່າງໃດທີ່ຈະນຳຄຳສັ່ງຂອງພຣະເຈົ້ານີ້ອອກໄປໃຊ້ໃນຊີວິດ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອໃຫ້ພວກເຮົາໝັ້ນໃຈວ່າພຣະເຈົ້າຊົງສະຖິດຢູ່ນຳພວກເຮົາແລະພລັງອຳນາດຂອງພຣະອົງ ນີ້ໝາຍຄວາມວ່າພວກເຮົາສຳເຣັດແລ້ວໃນຄຳສັ່ງຂອງພຣະອົງ

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ນຳນັກຮຽນໃຫ້ຟັງເຣື່ອງຂອງອາຈານຄົນນຶ່ງທີ່ຄຣູຈະເປັນຜູ້ເລົ່າໃຫ້ຟັງ.ໃຫ້ໂອກາດແກ່ນັກຮຽນອອກຄວາມຄິດເຫັນ. ຫລັງຈາກນັ້ນຄຣູຈະວາງຄຳຖາມ: ທ່ານຈະມີຄວາມກ້າຫານຢ່າງດຽວກັນນີ້ບໍ່ ທີ່ຈະປະເຊີນກັບບັນຫາຢ່າງນີ້. ມື້ນີ້ພວກເຮົາຈະມາເນັ້ນໜັກໃສ່ ວ່າເຮົາຈະມີຄວາມໝັ້ນໃຈຫລາຍປານໃດໃນພຣະເຈົ້າຂອງພວກເຮົາ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30)

2. ກ່ອນເຂົ້າຫ້ອງຮຽນຄຣູຈະຕຽມດັ່ງນີ້: ຂຽນຮ່າງຂອງບົດຮຽນລົງໃນກະດານ ຫລືໃສ່ເຈັ້ຽແຜ່ນໃຫຍ່ໄວ້ກ່ອນກໍໄດ້. ອົບພະຍົບ 3:7-15 ແລະ 4:1-17
   1. ການເຄື່ອນໄຫວ, ການຈັດຕຽມຂອງພຣະເຈົ້າ (ອົບພະຍົບ 3:7-9)
   2. ການຮຽກເອີ້ນຂອງພຣະເຈົ້າ (ອົບພະຍົບ 3:10-13)
   3. ຄຳຕອບຂອງພຣະເຈົ້າ (ອົບພະຍົບ 3:14-15)
   4. ອຳນາດຂອງພຣະເຈົ້າ (ອົບພະຍົບ 4:1-11)

5. ພຣະຄຸນຂອງພຣະເຈົ້າ (ອົບພະຍົບ 4:12-17)

3. ຖາມ: ທ່ານຍັງຈື່ຫຍັງໄດ້ແດ່ບໍ່ ກ່ຽວກັບເຣື່ອງໄຟໄໝ້ພຸ່ມໄມ້ໃນຄາວໂມເຊ? ຫລັງຈາກນັກຮຽນຕອບແລ້ວ. ຄຣູຈະອະທິບາຍໃນປະສົບການນັ້ນ . ໃນພຣະທັມຕອນນີ້ມີຖ້ອຍຄຳໃດທີ່ບົ່ງບອກເຖິງຄຸນລັກສະນະຂອງພຣະເຈົ້າ? ຖາມນັກຮຽນວ່າ ຄຸນລັກສະນະຂອງມະນຸດເດເປັນຢ່າງໃດ? ພຣະເຈົ້າໄດ້ມີສ່ວນຮ່ວມກັບຊີວິດມະນຸດໃນໂລກນີ້ບໍ?

4. ມາເບິ່ງຈຸດທີສອງຂອງບົດຮຽນນີ້ ຂໍ້ 10-13.ໂມເຊຕອບຄຳຮຽກເອີ້ນຂອງພຣະເຈົ້າຢ່າງໃດ? ຄວາມສົງສັຍໃນຕົນເອງ ແມ່ນຄວາມບາບບໍ່? ເປັນຫຍັງຈຶ່ງບາບ? ເປັນຫຍັງຈຶ່ງບໍ່ບາບ? ອະທິບາຍຕອບຄຳຖາມ ເພາະໃນຊີວິດຂອງພວກເຮົາ ບໍ່ມັກຢ້ານກົວແລະປະຕິບັດຕາມຄຳສັ່ງຂອງພຣະເຈົ້າ.

5. ຄຣູຈະຕ້ອງຕຽມບົດເທສນາສັ້ນໆໃນຄຳທີ່ວ່າ “ເຮົາເປັນຜູ້ຊຶ່ງເຮົາເປັນ” ໃນຂໍ້ 14. ນີ້ກໍແມ່ນຕົກຢູ່ໃນຈຸດທີ 3 ຂອງບົດຮຽນ. ເຈົ້າຈົ່ງໄປບອກຊົນຊາດອິສຣາເອນວ່າ “ເຮົາເປັນ” ຊົງໃຊ້ເຮົາມາ.

6. ໃນຮ່າງບົດຮຽນຈຸດທີ 4. ອ່ານດັງໆ 4:1-11. ເບິ່ງໃຫ້ຄັກໆ ແລ້ວຫາຂໍ້ແກ້ຕົວຂອງໂມເຊວ່າລາວແກ້ຕົວຢ່າງໃດແດ່. ໃຫ້ຂຽນຂໍ້ແກ້ຕົວໄວ້. ແລ້ວຄຣູຈະຖາມວ່າ ແຕ່ລະຂໍ້ພຣະເຈົ້າຕອບຢ່າງໃດແດ່? ຈົ່ງບອກວ່າແຕ່ລະຂໍ້ພຣະເຈົ້າໄດ້ເລັງໃສ່ຣິດອຳນາດຂອງພຣະອົງເອງ. ສິ່ງໃດອີກທີ່ໂມເຊຍັງຕ້ອງການ.

7. ຜູ້ສມັກໃຈຄົນນຶ່ງອ່ານ ອົບພະຍົບ 4:12-17. ຖາມ: ຄຳຕໍ່ວ່າສຸດທ້າຍຂອງໂມເຊ ແມ່ນເວົ້າຢ່າງໃດ? ແລະພຣະເຈົ້າກໍຕອບລາວວ່າຢ່າງໃດ? ເບິ່ງໃນຈຸດທີ 5 ຂອງບົດຮຽນ. ເປັນຫຍັງຈຶ່ງໃສ່ຫົວຂໍ້ວັກນີ້ວ່າ ພຣະຄຸນຂອງພຣະເຈົ້າ ຄຣູຈະອະທິບາຍ ພຣະເຈົ້າໄດ້ສຳແດງພຣະຄຸນຂອງພຣະອົງໃຫ້ໂມເຊເຫັນ ເຖິງແມ່ນໂມເຊຈະປະຕິເສດພຣະອົງປານໃດກໍຕາມ ພຣະອົງກໍຍັງຈັດຕຽມທຸກຢ່າງໃຫ້ແກ່ລາວ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ນຳພາຫ້ອງຮຽນໃຫ້ເບິ່ງຄືນຂໍ້ແກ້ຕົວຂອງໂມເຊ. ແລ້ວທ່ານເຄີຍມີຂໍ້ແກ້ຕົວອັນໃດແດ່ເວລາພຣະເຈົ້າເອີ້ນທ່ານໃຫ້ທຳງານໃຫ້ກັບພຣະອົງ? ທ່ານມີຫຍັງແຕກຕ່າງກັບໂມເຊບໍ?

9. ອ້ອນວອນອະທິຖານເພື່ອເຂົ້າເຝົ້າພຣະເຈົ້າວ່າພຣະອົງຈະກ່າວຢ່າງໃດຕໍ່ທ່ານ

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 3

# ຢ້ານກົວ: ຕໍ່ຄວາມກ້າວໜ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອົບພະຍົບ 13:26-14:9

**ພູມຫລັງຂອງພຣະຄັມພີ:** ອົບພະຍົບ ບົດທີ 13 ແລະ 14

**ຈຸດສຳຄັນສຳລັບບົດຮຽນນີ້:** ຄວາມຢ້ານກົວເຮັດໃຫ້ພວກເຮົາຫລົງລືມພຣະເຈົ້າຜູ້ຢູ່ເທິງສວັນ

**ຄຳຖາມເພື່ອການຄົ້ນຄວ້າ:** ຄວາມຢ້ານກົວເຮັດໃຫ້ພວກເຮົາຫລົງລືມພຣະເຈົ້າຜູ້ຢູ່ເທິງສວັນຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຢາກຈະຢັ້ງຢືນວ່າກຸນແຈທີ່ຈະເອົາຊະນະຄວາມຢ້ານກົວນັ້ນຈະຕ້ອງມີເຄັດລັບອັນແນບນຽນ ແລະອີງຕາມແຜນການຂອງພຣະເຈົ້າ.

## ແຜນການສິດສອນ

### ນຳເຣື້ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເວລານັກຮຽນເຂົ້າມາໃນຫ້ອງຮຽນທຸກຄົນແລ້ວ. ຢາຍເຈັ້ຽສຳລັບຂຽນໃຫ້ຄົນລະໃບແລະສໍດຳນຶ່ງແທ່ງ. ບອກເຂົາເຈົ້າໃຫ້ຕອບຄຳຖາມທີ່ຄຣູຈະບອກ.ທ່ານຈະເຮັດຢ່າງໃດ ເມື່ອທ່ານມີຄວາມກ້າຫານທີ່ຈະເຮັດໄດ້ທຸກຢ່າງ? ລໍຖ້າປະມານຈັກສອງສາມນາທີ ແລ້ວກໍໃຫ້ນັກຮຽນຕອບ. ບອກນັກຮຽນວ່າໃນມື້ນີ້ ພວກເຮົາຈະຮຽນເຣື່ອງ ກ້າຫານດີກວ່າຢ້ານກົວ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ກ່ອນຈະເລີ້ມ ໃຫ້ຄຣູຂຽນຮ່າງບົດສອນໃສ່ເຈັ້ຽຫລືກະດານກໍໄດ້.
   - ລືມຄຳສັນຍາກັນໝົດແລ້ວ (ອົບພະຍົບ 13:1-25)
   - ເຫັນຮູບພາບທີ່ຈະຕ້ອງປະເຊີນ (ອົບພະຍົບ 13:26-33)
   - ບໍ່ຕ້ອງຕົກໃຈ ພວກເຮົາຍັງມີແຜນການ (ອົບພະຍົບ 14:1-4)
   - ແມ່ນຈະຢູ່ໃນກອງໄຟກໍຕ້ອງເຊື່ອ (ອົບພະຍົບ 14: 5-9)
3. ຄຣູຈະອະທິບາຍເຖິງເຣື່ອງທີ່ພຣະເຈົ້າໄດ້ນຳຄົນອິສຣາເອນອອກຈາກປະເທດອີຢິບ ອອກຈາກເງື້ອມມືຂອງກະສັດຟາຣາໂອແລະກໍໄດ້ສຳແດງການອັສຈັນຫລາຍຢ່າງ. ພຣະເຈົ້າໄດ້ ບອກໂມເຊໃຫ້ຫາເອົາຜູ້ຊາຍເຜົ່າລະຄົນໃຫ້ໄປເປັນນັກສືບສອດແນມ.

4. ໃຫ້ຄົນນຶ່ງອ່ານ ອົບພະຍົບ 13:26-27 ພວກເຂົາກໍກັບມາລາຍງານຕໍ່ໂມເຊແລະອາໂຣນ. ພວກເຂົາໄດ້ນຳເອົາຂອງກາງມາດ້ວຍ. ຈົ່ງຈຳໄວ້ວ່າແຜ່ນດິນນີ້ ເປັນແຜ່ນດິນທີ່ພຣະເຈົ້າປະທານໃຫ້

ຄົນອິສຣາເອນ. ນັກສືບທັງຫລາຍເມື່ອເຫັນແລ້ວກໍຢ້ານກົວ ພວກເຂົາບໍ່ໄດ້ຄິດເຖິງພຣະເຈົ້າເລີຍ ພວກເຂົາບໍ່ໄດ້ຄິດເຖິງຣິດອຳນາດຂອງພຣະເຈົ້າເລີຍ.

5. ອ່ານ ອົບພະຍົບ 13:28-33 ພວກນັກສືບຖືກປິດຫູບັງຕາດ້ວຍສິ່ງທີ່ເຫັນຜ່ານມາ ພວກເຂົາບໍ່ເຫັນສິ່ງທີ່ພຣະເຈົ້າປະທານແກ່ພວກເຂົາ. ນັກສືບ10 ຄົນລາຍງານວ່າຢ່າງໃດ ພວກເຂົາເຫັນຫຍັງແດ່? ອະທິບາຍເຖິງຄວາມຢ້ານກົວ: ມັນເປັນຂອງທັມມະດາ ແຕ່ຕ້ອງມີວິທີແກ້ໄຂ ພວກເຮົາມີພຣະເຈົ້າຜູ້ຊົງຊ່ອຍໄດ້ແລະແກ້ໄຂໄດ້ທຸກຢ່າງ. ພຣະເຈົ້າໃຫ້ພວກເຮົາມີຄວາມຢ້ານກໍເພາະພຣະອົງຕ້ອງການໃຫ້ພວກເຮົາເພິ່ງພຣະອົງ.

6. ໃຫ້ຄົນນຶ່ງອ່ານ ອົບພະຍົບ 14: 1-4 ເມື່ອຟັງແລ້ວ. ຄຣູຕ້ອງເທສນາສັ້ນໆກ່ຽວກັບເຣື່ອງນີ້.ທ່ານເຄີຍມີຄວາມຢ້ານກົວຢ່າງນີ້ບໍ່? ແລະທ່ານກໍເຄີຍຄິດຢ່າງນີ້ບໍ?

7. ໃຫ້ຄົນນຶ່ງອ່ານ ອົບພະຍົບ 14: 5-9. ພວກເຮົາມາເບິ່ງນັກສືບອີກສອງຄົນ ຄື ຄາເລັບແລະໂຢຊວຍ ຄຣູຈະອະທິບາຍເຖິງຄວາມເຊື່ອຂອງພວກນີ້.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ທ່ານຈະເປັນນັກສືບສອງຄົນ ຫລືທ່ານຈະເປັນນັກສືບສິບຄົນ? ຂໍໃຫ້ທ່ານເວົ້າກັບພຣະເຈົ້າດ້ວຍຕົວຂອງທ່ານເອງ.

9. ອ້ອນວອນອະທິຖານ ຕຽມຕົວເຂົ້າເຝົ້າພຣະເຈົ້າ

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 4

# <u>ຄວາມຢ້ານນຳໄປສູ່ຄວາມໝົດຫວັງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** 1 ກະສັດ ບົດທີ 19:1-18

**<u>ພູມຫລັງຂອງພຣະຄັມພີ:</u>** 1 ກະສັດ ບົດທີ 19:17-19

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າໃຫ້ຄວາມໜູນໃຈພວກເຮົາ ຖ້າມກາງຄວາມໝົດຫວັງດ້ວຍສຽງກະຊິບຄ່ອຍໆໃສ່ຫູ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮັດແນວໃດພວກເຮົາຈຶ່ງຈະເອົາຊະນະຕໍ່ຄວາມຢ້ານທີ່ນຳໄປຫາຄວາມໝົດຫວັງນີ້ໄດ້?

**<u>ຈຸດປະສົງຂອງບົດຮຽນ:</u>** ໜູນໃຈຄົນອື່ນໃຫ້ຮູ້ຕົນເອງວ່າ ພວກເຮົາຕ້ອງການຢຸດພັກຜ່ອນ, ນັ່ງຄຶດຕຶກຕອງ, ຕື່ມນ້ຳມັນ, ແລະເຂົ້າສນິດຕິດກັບພຣະເຈົ້າເພາະສິ່ງນີ້ເປັນຢາວິເສດແກ້ຄວາມໝົດຫວັງໃນຊີວິດໄດ້.

**<u>ເພື່ອຄວາມເຂົ້າໃຈ:</u>** ພວກເຮົາທຸກຄົນຈະໜີບໍ່ພົ້ນຈາກຄວາມຮູ້ສຶກໝົດທາງ ແລະສິ້ນຫວັງນີ້. ພຣະເຈົ້າຈະເປັນຜູ້ປະທານຄວາມຫວັງແລະປິ່ນປົວພວກເຮົາຖ້າມກາງຄວາມສິ້ນຫວັງ.

## ບົດນຳ

ຫລັງຈາກກະສັດຊາໂລໂມນໄດ້ຕາຍໃນປີ (931 ກ່ອນ ຄ.ສ) ອານາຈັກໄດ້ແບ່ງເປັນສອງພາກຄືພາກເໜືອແລະພາກໃຕ້. ພາກເໜືອມີບັນຫາກັບເພື່ອນບ້ານຜູ້ມີກຳລັງຫລາຍກວ່າຈົນກະທັ້ງມີການກະບົດໂດຍນາຍທະຫານຜູ້ຊື່ວ່າໂອມຣີໃນປີ (885-874). ໂອມຣີໄດ້ສ້າງກຳລັງທະຫານໂດຍອະນຸຍາດໃຫ້ປະຊາຊົນນັບຖືພຣະຕ່າງໆໄດ້ ຈົນເປັນເຫດໃຫ້ຄົນສ່ວນຫລາຍປະຖິ້ມພຣະເຈົ້າພຣະເຢໂຮວາ. ລູກຊາຍຂອງໂອມຣີກໍໄດ້ໄປແຕ່ງງານກັບຄົນຕ່າງດ້າວຈາກປະເທດໂຟນີເຊັຽຜູ້ມີຊື່ວ່າ ເຢເຊເບນ. ນາງເປັນຄົນນັບຖືພຣະບາອານຢ່າງເຄັ່ງຄັດແລະກໍຊອກໂອກາດຂ້າຜູ້ປະກາດພຣະທັມພຣະເຈົ້າພຣະເຢໂຮວາໃຫ້ດັບໄປ ແລະບັງຄັບໃຫ້ຄົນໄປນັບຖືພຣະຂອງຕົນ (16:29-33, 18:4). ດັ່ງນັ້ນ, ຜູ້ປະກາດພຣະທັມເອລີຢາໄດ້ເອີ້ນປະຊາຊົນໃຫ້ສັດຊື່ນັບຖືພຣະເຈົ້າພຣະເຢໂຮວາແຕ່ອົງດຽວເທົ່ານັ້ນ.

ໃນທີ່ສຸດກໍມີການຕໍ່ສູ້ເຣື່ອງຄວາມເຊື່ອລະຫວ່າງຜູ້ປະກາດພຣະທັມເອລີຢາແລະຜູ້ຮັບໃຊ້ພຣະບາອານວ່າໃຜເປັນພຣະເຈົ້າອົງທ່ຽງແທ້ທີ່ພູເຂົາກາເມນ. ທັງສອງພວກນີ້ຕ້ອງເອີ້ນໃຫ້ຜູ້ທີ່ຕົນເອງເຊື່ອສົ່ງໄຟລົງມາຈາກສວັນເພື່ອໄໝ້ເຄື່ອງຖວາຍບູຊາ ພວກບາອານໄດ້ເອີ້ນໃສ່ພຣະຂອງຕົນດ້ວຍສຽງເພງແລະຟ້ອນລຳ ແຕ່ເຫັນວ່າບໍ່ມີການຕອບສນອງແຕ່ປະການໃດ. ໃນທີ່ສຸດເອລີຢາໄດ້ອ້ອນວອນແລະພຣະເຈົ້າກໍໄດ້ຕອບຢ່າງ

ວ່ອງ ໄວໂດຍສິ່ງໄຟມາໄໝ້ເຄື່ອງຖວາຍແລະນ້ຳ. ພຣະເຈົ້າໄດ້ສະແດງອຳນາດເອົາຊະນະພຣະບາອານ (18:16-40). ກະສັດອາຮາບເຫັນກັບຕາໃນສິ່ງທີ່ພຣະເຈົ້າໄດ້ເຮັດ ແລະນຳເຣື່ອງນີ້ໄປບອກນາງເຢເຊເບນ (18:44; 19:1). ຕອນນີ້ພຣະເຈົ້າໃຫ້ກຳລັງເອລີຢາແລ່ນໄປໄກໄດ້ເຖິງ 15 ໄມ ຈົນເຖິງບ່ອນນາງເຢເຊເບນ ຊຶ່ງກຳລັງພັກຢູ່ໃນວັງ ຄິດວ່ານາງເຢເຊເບນອາດປ່ຽນໃຈມານັບຖືພຣະເຈົ້າອົງທ່ຽງແທ້ເໝືອນປະຊາຊົນອື່ນໆ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ນຳເອົາຕົ້ນດອກໄມ້ນ້ອຍທີ່ຕ້ອງການນ້ຳ, ປຸຍ, ແລະແສງສະວ່າງມາໃນຫ້ອງ. ບອກໃຫ້ສະມາຊິກແຕ່ລະຄົນວິຈັຍເບິ່ງວ່າຕົ້ນດອກໄມ້ນີ້ຖ້າຕ້ອງການໃຫ້ມັນໃຫຍ່ຂຶ້ນຈະເຮັດແນວໃດ? ບອກວ່າຊີວິດຂອງຄຣິສະຕຽນກໍຄືກັນປຽບເໝືອນຕົ້ນດອກໄມ້ນ້ອຍນີ້.

2. ຖ້າທ່ານເປັນຜູ້ປະກາດພຣະທັມເອລີຢາຜູ້ຊະນະພຣະບາອານທີ່ພູເຂົາກາເມນ ທ່ານຈະມີຄວາມຮູ້ສຶກແນວໃດ? ອ່ານ 1 ກະສັດ 18:20-40. ທ່ານອາດຄິດວ່າມີຄວາມເຊື່ອຂຶ້ນສູງຫລັງຈາກໄດ້ເຫັນພຣະເຈົ້າເຮັດການອັສຈັນ ແຕ່ເຫັນວ່າພຣະຄັມພີໄດ້ເວົ້າກົງກັນຂ້າມເພາະເອລີຢາໄດ້ເບິ່ງແຕ່ບັນຫາໃນປັດຈຸບັນນີ້.

3. ຮ້ອງຂໍໃຫ້ຄົນນຶ່ງອ່ານ 1 ກະສັດ 19:1-5 ແບ່ງຫ້ອງອອກເປັນກຸ່ມນ້ອຍສຸດແລ້ວແຕ່ຈຳນວນ ແລະບອກໃຫ້ແຕ່ລະກຸ່ມຂຽນເຣື່ອງທີ່ເອລີຢາກ່າວ ແລະເລືອກເອົາຜູ້ນຳເພື່ອລາຍງານໃຫ້ຄົນອື່ນໄດ້ຮູ້ນຳວ່າກຸ່ມຕົນເອງຂຽນແນວໃດ. ກ່າວວ່າທຸກຄົນຈະໄດ້ພົບກັບບັນຫາໃນຊີວິດບໍ່ຊ້າກໍໄວ ເຖິງຈະເປັນຄົນເຊື່ອທີ່ດີໃນພຣະເຈົ້າກໍຕາມ.

4. ບອກຄົນໃຫ້ຢູ່ໃນກຸ່ມນ້ອຍຂອງຕົນເອງຕາມເຄີຍ ບອກໃຫ້ແຕ່ລະກຸ່ມອ່ານ 1 ກະສັດ 19:5-9 ແລະໃຫ້ຕອບຄຳຖາມຂ້າງລຸ່ມນີ້:
   - ເປັນຫຍັງເທວະດາຈຶ່ງປຸກໃຫ້ເອລີຢາຕື່ນ?
   - ພຣະເຈົ້າເອົາຫຍັງໃຫ້ແກ່ເອລີຢາ? ເປັນດ້ວຍເຫດໃດ?
   - ເປັນຫຍັງເທວະດາເອົາອາຫານແລະນ້ຳດື່ມມາໃຫ້ເອລີຢາເປັນຄັ້ງທີສອງ?
   - ເທວະດາບໍ່ໄດ້ກ່າວຕໍ່ເອລີຢາໃນເຣື່ອງໃດ? (ລົງໂທດຫລືສາບແຊ່ງ)
   - ໃນເມື່ອທ່ານໝົດກຳລັງ ຫລືໝົດຫວັງແມ່ນຫຍັງຊ່ອຍທ່ານໃຫ້ມີແຮງຂຶ້ນມາໃໝ່ ບໍ່ວ່າດ້ານຈິດໃຈແລະຄວາມເຊື່ອ?

5. ອ່ານ 1 ກະສັດ 19:9-13 ອອກສຽງດັງ ຖາມວ່າເປັນຫຍັງເອລີຢາຈຶ່ງໄປຢູ່ທີ່ພູເຂົາໂຮເຣັບຊຶ່ງເປັນອີກຊື່ນຶ່ງຂອງພູຊີນາອີ ບ່ອນດັ່ງກ່າວນີ້ມີຄວາມສຳຄັນຢ່າງໃດ?

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 5

# ຢ້ານຖືກແກ້ແຄນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອສະເທີ 4:4-17; 7:1-6

**ພູມຫລັງຂອງພຣະຄັມພີ:** ເອສະເທີ 3-8

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມຢ້ານອາດເຮັດໃຫ້ຄົນຢາກເຮັດສິ່ງຖືກຕ້ອງມິດງຽບຢູ່.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮັດແນວໃດພວກເຮົາຈຶ່ງຈະບໍ່ຢ້ານເພື່ອຊອກຫາໂອກາດຕໍ່ສູ້ສິ່ງອະທັມ?

**ຈຸດປະສົງຂອງບົດຮຽນ:** ຕັດສິນໃຈທຳລາຍຄວາມຢ້ານອອກໄປເພື່ອຊອກຫາໂອກາດຕໍ່ສູ້ກັບສິ່ງອະທັມ.

**ເພື່ອຄວາມເຂົ້າໃຈ:** ຈຳເປັນຕ້ອງມີຄວາມກ້າຫານຕໍ່ສູ້ກັບຄວາມອະທັມ ຖ້າບໍ່ດັ່ງນັ້ນຄວາມອະທັມກໍຈະຕັ້ງຢູ່. ເອົາຕົວຢ່າງຂອງມະເຫສີ ເອສະເທີ ຜູ້ມີໃຈກ້າຕໍ່ສູ້ກັບຄວາມອະທັມເຖິງຕາຍກໍຍອມ.

## ບົດນຳ

ຄຳຂວັນອັນນຶ່ງໃນພຣະຄັມພີເດີມແມ່ນຄວາມສັດຊື່ຂອງພວກຢິວເພື່ອຈະໄດ້ຮັບພຣະພອນ ແຕ່ໃນເມື່ອບໍ່ສັດຊື່ການລົງໂທດກໍຈະມາເຖິງ. ຫລັງຈາກຜູ້ປະກາດພຣະທັມໄດ້ເຕືອນຫລາຍໆເທື່ອພວກຢິວບໍ່ຟັງ ໃນທີ່ສຸດພວກເຂົາກໍໄດ້ຖືກກວດລ້າງໄປເປັນຊະເລີຍເສິກໃນຕ່າງແດນ. ໃນຕອນນີ້ປະວັດສາດໄດ້ທັນປ່ຽນໄປກ່າວເຖິງກຸງບາບີໂລນແລະປະເທດເປີເຊັຽຊຶ່ງເປັນບ່ອນພວກຢິວບາງຄົນໄດ້ໄປເປັນອົບພະຍົບໃນທີ່ນັ້ນ ປຶ້ມເອເຊກຽນ ແລະດານີເອນໄດ້ກ່າວເຖິງກຸງບາບີໂລນ ແຕ່ໃນປຶ້ມເອສະເທີໄດ້ເວົ້າເຖິງອານາຈັກຂອງປະເທດເປີເຊັຽ.

ເຫດການທີ່ເກີດຂຶ້ນໃນປຶ້ມເອສະເທີແມ່ນຢູ່ເມືອງຊູຊາ ເປັນເມືອງເອກບ່ອນພັກຍາມໜາວຂອງອານາຈັກເປີເຊັຽ ກະສັດເຊເຊັດເປັນກະສັດໃນປີ 485-465 ກ່ອນ ຄສ. ເຖິງແມ່ນວ່າໃນປຶ້ມນີ້ບໍ່ມີຊື່ຂອງພຣະເຈົ້າແຕ່ຮູ້ວ່າພວກຢິວໄດ້ເຊື່ອໃນພຣະເຈົ້າອົງດຽວເພື່ອໃຫ້ໄດ້ຮັບຄວາມລອດພົ້ນແລະຮັບພຣະພອນ.

ນາງເອສະເທີໄດ້ເກັບເປັນຄວາມລັບເຖິງເຊື້ອຊາດຂອງຕົນ. ເມື່ອກະສັດເຊເຊັດໄດ້ປົດຕຳແໜ່ງມະເຫສີວາຊາຕີເພາະບໍ່ຍອມເຮັດຕາມຄຳສັ່ງຂອງກະສັດໃຫ້ອອກມາປາກົດຄວາມງາມໃຫ້ຄົນທີ່ມາໃນງານລ້ຽງໄດ້ເຫັນ (ເອສະເທີ 1:11) ກະສັດເຊເຊັດຈຶ່ງອອກປະກາດໃຫ້ມີການປະກວດນາງງາມເພື່ອກະສັດຈະໄດ້ເລືອກເອົາຄົນນຶ່ງມາເປັນມະເຫສີແທນ. ນາງເອສະເທີຜູ້ເປັນລູກກຳພ້າ ແຕ່ຍາດພີ່ນ້ອງມໍເດກາຍໄດ້ເອົາມາລ້ຽງແຕ່ນ້ອຍ. ນາງເອສະເທີມີຮູບຮ່າງໜ້າຕາສວຍງາມ (2:7) ໄດ້ກາຍເປັນມະເຫສີ (2:17). ມໍເດກາຍໄດ້ເປັນ

ຣາຊການຜູ້ນ້ອຍແລະໄດ້ບອກໃຫ້ເອສະເທີປິດບັງເຣື່ອງຊາດຂອງນາງ (2:10) ຮາມານເປັນຜູ້ລອງຂອງກະສັດໄດ້ເປັນຄົນກຽດຊັງພວກຢິວ ແລະວາງແຜນການໂດຍອອກນາມຊື່ກະສັດວ່າໃຫ້ຂ້າພວກຢິວທັງໝົດຕາມເວລາກຳນົດ (3:13). ເຫັນວ່າຄວາມອະທັມໄດ້ເກີດຂຶ້ນຈົນມະເຫສີເອສະເທີໄດ້ເອົາຊະນະຄວາມຢ້ານແລະຊ່ອຍບໍ່ໃຫ້ພວກຢິວຖືກຂ້າຕາຍທັງຊາດ.

ທຸກວັນນີ້ພວກຢິວທີ່ອ່ານປຶ້ມເອສະເທີໃນງານສລອງປູຣິມຊຶ່ງເປັນວັນຈັດໄວ້ທີ່ເຂົາຈະລ້າງໂຄດພວກຢິວ. ງານນີ້ໄດ້ສລອງທີ່ພຣະເຈົ້າໄດ້ໃຊ້ຜູ້ຍິງຄົນນຶ່ງໃຫ້ມີຄວາມກ້າຫານດ້ວຍຄວາມເຊື່ອຊ່ອຍບໍ່ໃຫ້ຄົນຢິວຕາຍແຕ່ໄດ້ພົ້ນພັຍອັນຕະລາຍ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

6. ກ່ອນເຂົ້າຫ້ອງຮຽນຂຽນໃສ່ກະດານຄຳເວົ້າຂອງຜູ້ເຫລືອຕາຍຈາກຄ້າຍຢິວ ທີ່ຮິດເລີໄດ້ຂ້າຄົນຢິວເປັນລ້ານຄົນ. "ມັນອາດມີເວລາທີ່ພວກເຮົາໝົດແຮງທີ່ຈະຕໍ່ຕ້ານຄວາມອະທັມ, ແຕ່ພວກເຮົາບໍ່ຄວນໝົດໂອກາດທີ່ຈະປະທ້ວງ."

7. ແບ່ງຫ້ອງຮຽນອອກໄປກຸ່ມນ້ອຍສຸດແລ້ວແຕ່ຈຳນວນຄົນ. ຢາຍເຈັ້ຽໃຫ້ທຸກຄົນໃນກຸ່ມ ແລະບອກໃຫ້ແຕ່ລະກຸ່ມອອກຄວາມຄິດຊ່ອຍກັນເຖິງສິ່ງອະທັມສິບຢ່າງທີ່ພວກເຮົາໄດ້ຮູ້ໄດ້ເຫັນ. ຫລັງຈາກນັ້ນແລ້ວໃຫ້ເລືອກເອົາຜູ້ຕາງໜ້າຈາກແຕ່ລະກຸ່ມລາຍງານໃຫ້ທຸກຄົນໄດ້ຍິນນຳ.

8. ໜູນໃຈໃຫ້ສະມາຊິກໃນຫ້ອງຮຽນກ່າວປະວັດເບື້ອງຫລັງຂອງເອສະເທີໃຫ້ຄົນອື່ນຟັງ ເຮັດເໝືອນກັບເວົ້ານິທານໃຫ້ເດັກນ້ອຍຟັງ.

9. ແບ່ງຫ້ອງຮຽນອອກເປັນສີ່ກຸ່ມ ແລະໃຫ້ແຕ່ລະກຸ່ມຫລິ້ນລະຄອນເປັນ: ເອສະເທີ, ມໍເດກາຍ, ກະສັດເຊເຊັດ, ແລະຮາມານ. ບອກໃຫ້ແຕ່ລະກຸ່ມອ່ານເອສະເທີ 4:4-17 ແລະ 7:1-6 ບອກໃຫ້ແຕ່ລະກຸ່ມຂຽນເປັນບົດລະຄອນ ແລະບອກໃຫ້ແຕ່ລະກຸ່ມເລືອກເອົາຜູ້ນຳໃຫ້ອ່ານສິ່ງທີ່ກຸ່ມຕົນເອງໄດ້ຂຽນຂຶ້ນມາໃຫ້ທຸກຄົນຟັງ.

10. ຫລັງຈາກທຸກກຸ່ມໄດ້ອ່ານສິ່ງກຸ່ມຕົນເອງຂຽນຂຶ້ນມາແລ້ວ ໃຊ້ຄຳຖາມຕໍ່ລົງໄປນີ້ເພື່ອສັມພາດສະມາຊິກຂອງແຕ່ລະກຸ່ມຊຶ່ງເປັນຕົວແທນຫລິ້ນລະຄອນ:
<u>ເອສະເທີ:</u> ເປັນຫຍັງທ່ານເປັນຫ່ວງເຖິງຄວາມປະພຶດຂອງມໍເດກາຍທີ່ປາກປະຕູວັງ? ທ່ານເຮັດແນວໃດຈຶ່ງສລູບໄດ້ວ່າສິ່ງທີ່ຄວນຈັດຕຽມໃນເຣື່ອງນີ້ຄືໜູນໃຈໃຫ້ພວກຢິວອ້ອນວອນ ແລະຖືສິນອົດອາຫານເພື່ອ?

<u>ນໍເດກາຍ:</u> ເປັນຫຍັງທ່ານຈຶ່ງປະພຶດຢ່າງນັ້ນທີ່ປະຕູເມືອງ? ເປັນຫຍັງທ່ານຈຶ່ງບອກໃຫ້ນາງເອສະເທີເກັບຄວາມລັບເຣື່ອງເຊື້ອຊາດເປັນຢິວ? ທ່ານຄຶດວ່າເອສະເທີຈະເປັນຄົນແຕກຕ່າງຕໍ່ສູ້ກັບການອະທັມຢ່າງໃດ?

<u>ຮາມານ:</u> ເປັນຫຍັງທ່ານຈຶ່ງກຽດຊັງຊາວຢິວແທ້? ເປັນຫຍັງທ່ານຄຶດວ່າກະສັດເຊເຊັດຈະເຮັດຕາມຄຳແນະນຳຂອງທ່ານໃຫ້ຂ້າພວກຢິວທັງຊາດ? ທ່ານຄຶດແນວໃດໃນເມື່ອເອສະເທີໄດ້ເຊີນທ່ານພ້ອມກະສັດເຂົ້າຮ່ວມງານກິນລ້ຽງ? ທ່ານຄຶດແນວໃດໃນເມື່ອທ່ານຮູ້ຈັກວ່າເອສະເທີເປັນຄົນຢິວ? ທ່ານມີຄວາມຄຶດສຸດທ້າຍກ່ອນທ່ານຖືກແຂວນຄໍຕາຍຢ່າງໃດ?

<u>ກະສັດເຊເຊັດ:</u> ເປັນຫຍັງທ່ານຈຶ່ງເຊັນອອກຄຳສັ່ງໃຫ້ຂ້າພວກຢິວ? ທ່ານຄຶດແນວໃດຈຶ່ງຍອມຮັບການເຂົ້າໄປຫາໂດຍທີ່ບໍ່ໄດ້ເອີ້ນ? ທ່ານຄຶດແນວໃດໃນເມື່ອເອສະເທີເຊີນໄປກິນລ້ຽງເມື່ອທ່ານຮູ້ວ່າມະເຫສີເອສະເທີເປັນຄົນຢິວ?

11. ຂຽນຄຳເວົ້າ, “ເປົ່າໝາກວິດ” ໃສ່ກະດານ ບອກໃຫ້ສະມາຊິກຊອກເອົາເຣື່ອງບໍ່ດີທີ່ມີຄົນເປົ່າໝາກວິດໃສ່ນັ້ນມີຫຍັງແດ່?

*ສບ. ບຸນຈັນ ວົງສຸຣິດທ໌*

# ຄໍາແນະນໍາສໍາລັບຄຣູສອນ
# ບົດຮຽນທີ 6
# ຢ້ານທີ່ຈະບອກ ເພາະເປັນເຣື່ອງຄົນບໍ່ນິຍົມ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ເຢເຣມີຢາ 1

**ພູມຫລັງຂອງພຣະຄັມພີ:** ເຢເຣມີຢາ 1

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຕ້ອງຮູ້ແນ່ວ່າພຣະເຈົ້າຊົງສະຖິດຢູ່ນໍາເມື່ອພວກເຮົານໍາຂ່າວດີໄປບອກຄົນອື່ນ.

**ຄໍາຖາມເພື່ອການຄົ້ນຄວ້າ:** ແມ່ນຫຍັງເປັນສິ່ງທີ່ພຣະເຈົ້າບອກໃຫ້ຂ້າພະເຈົ້າປະກາດ ແຕ່ເປັນເຣື່ອງຄົນບໍ່ນິຍົມ?

**ຈຸດປະສົງຂອງບົດຮຽນ:** ຕັດສິນໃຈ ແລະໄວ້ວາງໃຈໃນພຣະເຈົ້າໃນເມື່ອບອກໃຫ້ປະກາດ.

**ເພື່ອຄວາມເຂົ້າໃຈ:** ບໍ່ມີໃຜຢາກບອກຂ່າວຮ້າຍ. ແຕ່ໃນເມື່ອພຣະເຈົ້າແຕ່ງຕັ້ງໃຫ້ໄປບອກແລ້ວ ພຣະອົງສັນຍາວ່າຈະໃຫ້ເກີດຜົນ.

## ບົດນໍາ

ປື້ມເຢເຣມີຢາເປັນປື້ມຢູ່ໃນໝວດຜູ້ທໍານວາຍໃຫຍ່ຮ່ວມກັບປື້ມ ເອຊາຢາ, ເອເຊກຽນ. ຄວາມຈິງມີຢູ່ວ່າປື້ມເຢເຣມີຢາຍາວກວ່າປື້ມຢູ່ໃນໝວດຜູ້ທໍານວາຍນ້ອຍສິບສອງຫົວຮວມກັນ ປື້ມເຢເຣມີຢາເປັນປື້ມພິເສດໃນຖ້ານກາງຜູ້ປະກາດພຣະທັມຂອງພວກຍິວ ເພາະເຢເຣມີຢາໄດ້ໃຊ້ວິທີຊຽນຫລາຍໆແບບເຊັ່ນ: ປະວັດສາດ, ບົດເທສນາ, ຄໍາເວົ້າອື່ນໆທີ່ຄົນເຄີຍໃຊ້, ຄໍາຖາມຄໍາຕອບ, ແລະສຸພາສິດ. ໝາຍຄວາມວ່າປື້ມເຢເຣມີຢາໄດ້ໃຊ້ເຣື່ອງມະນຸດປະກອບເພື່ອຈະເຂົ້າໃຈດີເຖິງເຣື່ອງຂອງພຣະເຈົ້າ.

ຂໍ້ເລີ້ມຕົ້ນໄດ້ບອກເຖິງປະວັດຂອງຜູ້ປະກາດພຣະທັມເຢເຣມີຢາຊຶ່ງຮັບໃຊ້ເປັນເວລາສີ່ສິບຫ້າປີ. ເຢເຣມີຢາໄດ້ເລີ້ມຕົ້ນຮັບໃຊ້ໃນປີ 626 ກ່ອນ ຄສ. ເຢເຣມີຢາເປັນຄົນໂສດຊຶ່ງແຕກຕ່າງກັບຜູ້ຊາຍຍິວຄົນອື່ນຕາມປົກກະຕິແລ້ວພວກຜູ້ຊາຍຍິວຈະແຕ່ງງານອາຍຸກ່ອນຊາວປີ.

ສິ່ງນຶ່ງທີ່ຜູ້ປະກາດພຣະທັມເຢເຣມີຢາກປະກາດນັ້ນເປັນເຣື່ອງຄົນບໍ່ນິຍົມເພາະເປັນຂ່າວຮ້າຍ. ເຢເຣມີຢາໄດ້ບອກເຖິງຄວາມຜິດບາບຂອງຄົນທັງຊາດ ແລະພວກເຂົາຈະຕົກເປັນທາດຂອງກຸງບາບີໂລນ. ຖ້າຈະແປໃຫ້ເຂົ້າໃຈໃນພາສາທຸກວັນນີ້ແມ່ນ ໃຫ້ຍອມຕໍ່ພວກທະຫານອີຣັກທີ່ກໍາລັງບຸກໂຈມຕີ. ການເຮັດຢ່າງນີ້ໝາຍເຖິງປະກາດໃຫ້ຄົນຍອມຕໍ່ຄົນຕ່າງຊາດເພື່ອເຮັດໃຫ້ຈິດວິນຍານຖືກຊໍາຮະໃຫ້ສະອາດດີ. ແຕ່ໃນຕອນສຸດທ້າຍຂອງປື້ມນີ້ໄດ້ເຫັນເຖິງການຖືກທໍາລາຍຂອງກຸງເຢຣູຊາເລັມ ແລະຂ້າຣາຊການຕ່າງໆກໍຖືກຈັບໄປເປັນຊະເລີຍ. ການປະກາດຂອງຜູ້ປະກາດພຣະທັມເຢເຣມີຢາທີ່ຄົນບໍ່ນິຍົມກໍກາຍເປັນຄວາມຈິງແທ້.

ຕລອດຊີວິດຂອງຜູ້ປະກາດພຣະທັມເຢເຣມີຢາໄດ້ຖືກຄົນທົວຂວັນ, ຫ້າມບໍ່ໃຫ້ເຂົ້າຮ່ວມໃນພຣະວິຫານ, ແລະຍັງຖືກຄຸກອີກ. ເຢເຣມີຢາໄດ້ຕາຍໃນຄຸກທີ່ປະເທດອີຢິບ. ປຶ້ມເຢເຣມີຢາໄດ້ສອນໃຫ້ເຊື່ອຟັງພຣະເຈົ້າ ເພື່ອຈະໄດ້ຮັບເອົາພຣະພອນ ຜູ້ຮັບໃຊ້ໃຫ້ມີໃຈກ້າໃນການປະກາດ ເຖິງແມ່ນຄົນບໍ່ຢາກຟັງເພາະເປັນເຣື່ອງຄົນບໍ່ນິຍົມກໍຕາມ. ຖ້າຢາກໃຫ້ພຣະເຈົ້າສະຖິດຢູ່ນຳແລ້ວຈຳເປັນຕ້ອງເວົ້າແຕ່ຄວາມຈິງ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

12. ເອົາກະດານມາ ຫລືເຈັ້ງໃຫຍ່ຕິດໄວ້ທີ່ຝາ ບອກໃຫ້ສະມາຊິກແຕ່ລະຄົນຂຽນວ່າ "ຜູ້ນຳໃນປະວັດສາດຜູ້ເວົ້າເຣື່ອງຄົນບໍ່ນິຍົມ ແຕ່ເປັນຄວາມຈິງ". ຕັ້ງຄຳຖາມວ່າເປັນດ້ວຍເຫດໃດເຣື່ອງຢ່າງນີ້ຈຶ່ງເປັນການລຳບາກທີ່ຈະບອກຄົນອື່ນ?

13. ອີກດ້ານນຶ່ງບອກໃຫ້ສະມາຊິກໃນຫ້ອງຂຽນຊື່ຜູ້ປະກາດພຣະທັມຕ່າງໆ ໃນພຣະຄັມພີ ຜູ້ປະກາດເຣື່ອງຄົນບໍ່ນິຍົມ. ຕັ້ງຄຳຖາມວ່າເປັນຫຍັງຈຶ່ງເປັນການຍາກທີ່ຈະບອກເຣື່ອງບໍ່ນິຍົມໃຫ້ຄົນອື່ນຟັງ? ບອກວ່າຜູ້ປະກາດເຢເຣມີຢາມີເຣື່ອງຄົນບໍ່ນິຍົມ ແລະເຣື່ອງນີ້ກໍທ້າທາຍພວກເຮົາໃນທຸກວັນນີ້.

14. ປະວັດຫຍໍ້ຂອງຜູ້ປະກາດເຢເຣມີຢາຊຶ່ງເປັນຄຳຖາມຄຳຕອບ:
    ກ. ອາຊີບຄອບຄົວຂອງເຢເຣມີຢາແມ່ນຫຍັງ? (ປະໂຣຫິດ)
    ຂ. ເຢເຣມີຢາໄດ້ເລີ້ມຮັບໃຊ້ໃນສມັຍຂອງກະສັດອົງໃດ? (ໂຢຊາຍຢາ)
    ຄ. ເຢເຣມີຢາໄດ້ສິ້ນສຸດການຮັບໃຊ້ໃນສມັຍຂອງກະສັດອົງໃດ? (ເຊດີກີຢາ)
    ງ. ອັນໃດເປັນເຫດໃຫ້ຮູ້ວ່າການຮັບໃຊ້ຂອງເຢເຣມີຢາໄດ້ສິ້ນສຸດລົງ? (ກຸງເຢຣູຊາເລັມຕົກໄປ)
    ຈ. ເວລາໃດພຣະເຈົ້າໄດ້ຮູ້ຈັກເຢເຣມີຢາ? (ຢູ່ໃນທ້ອງແມ່)
    ສ. ເວລາໃດພຣະເຈົ້າໄດ້ຊຳຣະເຢເຣມີຢາ? (ກ່ອນເກີດ)
    ຊ. ເຢເຣມີຢາມີຂໍ້ແກ້ຕົວບໍ່ຢາກຮັບໃຊ້ແມ່ນຫຍັງ? (ເວົ້າບໍ່ເກ່ງ ຍັງເປັນເດັກ)
    ຍ. ພຣະເຈົ້າໄດ້ສັນຍາກັບເຢເຣມີຢາອັນໃດ? (ພຣະເຈົ້າຈະນຳພາຈະຊ່ອຍ)
    ດ. ພຣະເຈົ້າໄດ້ເຮັດອັນໃດເພື່ອບອກວ່າໄດ້ໃຊ້ອອກໄປປະກາດ? (ພຣະເຈົ້າຈັບປາກເພິ່ນ)
    ຕ. ເຢເຣມີຢາໄດ້ເຫັນນິມິດອັນທຳອິດ? (ກິ່ງຕົ້ນອາລມອນ)
    ຖ. ນິມິດທຳອິດມີຄວາມໝາຍຢ່າງໃດ? (ພຣະເຈົ້າໄດ້ເບິ່ງໂລກແລະທຳການອັສຈັນ)
    ທ. ນິມິດອັນທີສອງແມ່ນຫຍັງ? (ໝໍ້ນ້ຳຮ້ອນງຽງໄປທາງທິດເໜືອ)
    ນ. ນິມິດອັນທີສອງມີຄວາມໝາຍຢ່າງໃດ? (ຄວາມໂທດຮ້າຍຈະມາຈາກທາງເໜືອ)
    ບ. ເປັນຫຍັງພຣະເຈົ້າຈຶ່ງລົງໂທດກຸງເຢຣູຊາເລັມ? (ຄົນປະຖິ້ມພຣະເຈົ້າ, ຖວາຍກຽດພຣະອື່ນ, ນັບຖືສິ່ງຄົນສ້າງຂຶ້ນ.
    ປ. ພຣະເຈົ້າທ້າທາຍເຢເຣມີຢາອັນສຸດທ້າຍຢ່າງໃດ? (ໃຫ້ຈ້ອນເສື້ອ, ລຸກ, ອອກໄປບອກຄົນທັງ

ຫລາຍສິ່ງທີ່ພຣະເຈົ້າໄດ້ສັ່ງ.

ຜ. ມີສິ່ງປະກອບສາມຢ່າງທີ່ພຣະເຈົ້າສະແດງໃຫ້ເຢເຣມີຢາເຫັນເພື່ອເປັນສິ່ງບອກວ່າພຣະອົງຊ່ວຍ? (ເມືອງໃຫຍ່, ເປັນເສົາແຂງແຮງ, ເປັນກຳແພງກ້າ)

15. ແບ່ງຫ້ອງຮຽນອອກເປັນກຸ່ມຕາມຈຳນວນຄົນໃນຫ້ອງ.  ບອກໃຫ້ແຕ່ລະກຸ່ມແຕ່ງບົດລະຄອນກ້ອມເຣື່ອງຜູ້ປະກາດພຣະທັມເຢເຣມີຢາ.  ໃຫ້ແຕ່ລະກຸ່ມສະແດງສິ່ງທີ່ກຸ່ມຕົນເອງໄດ້ແຕ່ງຂຶ້ນມາໃຫ້ທຸກຄົນໄດ້ເບິ່ງ.  ບອກໃຫ້ແຕ່ລະກຸ່ມຊອກວິທີເຮັດເໝືອນເຢເຣມີຢາເພື່ອສະແດງເຖິງການເຊື່ອຟັງພຣະເຈົ້າ?

*ສບ. ບຸນຈັນ ວົງສຸຣິດທ໌*

## ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 7

## ຢ້ານພຣະເຈົ້າຫລາຍກວ່າຢ້ານມະນຸດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ດານີເອນ 3: 1-2, 8-18, 25-29

**ພູມຫລັງຂອງພຣະຄັມພີ**: ດານີເອນ 3

**ຈຸດສຳຄັນສຳລັບບົດຮຽນນີ້**: ການສັດຊື່ຕໍ່ພຣະເຈົ້າຈະຕ້ອງປະກອບດ້ວຍຄວາມເຊື່ອແລະການສ່ຽງພັຍ.

**ຄຳຖາມເພື່ອຄົ້ນຄວ້າ**: ພວກເຮົາຈະຢ້ານພຣະເຈົ້າຫລາຍກວ່າຢ້ານມະນຸດໄດ້ວິທີໃດ?

**ຈຸດປະສົງຂອງການສຶກສານີ້**: ຍອມສ່ຽງພັຍເພື່ອຈະໄດ້ສັດຊື່ຕໍ່ພຣະເຈົ້າ.

**ອ່ານລວບ**: ຢູ່ໃນໂລກທີ່ມີການຕໍ່ຕ້ານຄຣິສຕຽນຫລາຍຂຶ້ນ, ພວກເຮົາອາດຈະພົບກັບພັຍເຣື່ອງການຊິງຄອບຄອງຂອງພຣະເຈົ້າ ຫລາຍກວ່າຄວາມສັດຊື່ຂອງພວກເຮົາ.

## ແຜນສຳລັບການສອນ

**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ກ່ອນມື້ຮຽນໃຫ້ຊອກຕຽມຂ່າວ ຫລືຂໍ້ມູນເຣື່ອງການຂົ່ມເຫງຄຣິສຕຽນໄວ້ເພື່ອແບ່ງປັນກັບນັກຮຽນ. ເລີ້ມການສຶກສາພຣະຄຳໂດຍການສົນທະນາສິ່ງທີ່ໄດ້ເກັບກຳມາ. ເວົ້າວ່າ, ບົດຮຽນມື້ນີ້ ແມ່ນເຣື່ອງຂອງຊາຍສາມຄົນທີ່ຖືກຂົ່ມເຫງເພາະຄວາມເຊື່ອ ແລະພວກເຂົາເຈົ້າວາງທຸກຢ່າງໄວ້ກັບພຣະເຈົ້າ.
2. ໃຊ້ເບື້ອງຫລັງໃນບົດຮຽນບັລຍາຍຄວາມເປັນມາຂອງຊັດຣາກ, ເມຊາກ, ແລະອາເບັດເນໂກ (ດານີເອນ 1 ແລະ 2)

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

3. ຂຽນຫົວເຣື່ອງໃຫຍ່ໃສ່ກະດານໄວ້ ຫລືຂຽນໃສ່ກະດາດໄວ້ກ່ອນເພື່ອຢາຍໃຫ້ນັກຮຽນ.
   1) ເວທີພ້ອມແລ້ວ (ດນອ 3: 1-2)
   2) ການຂູ່ເຂັນມີຈິງ (ດນອ 3: 1-18)
   3) ໄຟບໍ່ມີຣິດ (ດນອ 3: 25-29)
4. ໃຫ້ສາມຄົນອ່ານພຣະຄຳ ຈາກສາມຫົວຂໍ້ຂ້າງເທິງນີ້. ອະທິບາຍສັ້ນໆໃຫ້ທຸກຄົນຟັງ. ຖາມນັກຮຽນ:
   1) ເວທີພ້ອມແລ້ວ (ດນອ 3: 1-2)
      - ທ່ານຄິດວ່າເປັນຫຍັງກະສັດເນບູກາດເນັດຊາຈຶ່ງເຮັດຮູບໂຄຣົບຂຶ້ນ ແລ້ວສັ່ງໃຫ້ຜູ້ນຳຂອງເພິ່ນມາຮ່ວມສລອງ?
      - ກະສັດຕ້ອງການຫຍັງຈາກງານອັນຍິ່ງໃຫຍ່ນີ້?

- ທ່ານຄິດວ່າກະສັດຮູ້ຕົວບໍ່ວ່າມີບາງຄົນຈະບໍ່ຍອມກົ້ມຂາບໄຫວ້ພຣະນັ້ນ?

2) ການຊູ່ເຂັ້ນມີຈິງ (ດນອ 3: 1-18)
   - ທ່ານຄິດວ່າເປັນຫຍັງຊາວບາບີໂລນບາງຄົນຈຶ່ງອິດສາຄົນຢິວອົບພະຍົບ?
   - ເປັນຫຍັງກະສັດເນບູກາດເນັດຊາຈຶ່ງໂກດຮ້າຍເມື່ອໄດ້ຍິນເລື່ອງຂອງຊັດຣາກ, ເມຊາກ , ແລະອາເບັດເນໂກ?
   - ທ່ານຄິດວ່າຖ້າກະສັດໃຫ້ໂອກາດ ພວກຊາຍທັງສາມຈະປະຕິເສດ ຫລືຍອມກົ້ມຂາບໄຫວ້ຮູບປັ້ນບໍ່?
   - ເປັນຫຍັງຊາຍໜຸ່ມທັງສາມບໍ່ຖຽງປ້ອງກັນຕົວເອງຕໍ່ໜ້າກະສັດ?
   - ທ່ານຄິດວ່າຊາວໜຸ່ມທັງສາມໝັ້ນໃຈວ່າພຣະເຈົ້າຈະຊົງປົດປ່ອຍພວກຕົນບໍ່?
   - ພວກເຮົາຈະມີຄວາມເຊື່ອເໝືອນຊາຍໜຸ່ມທັງສາມໄດ້ຢ່າງໃດ?

3) ໄຟບໍ່ມີຣິດ (ດນອ 3: 25-29)
   - ທ່ານຄິດວ່າກະສັດກຳລັງຄິດຫຍັງເວລາເພິ່ນເຫັນຊາຍສີ່ຄົນຍ່າງຢູ່ໃນເຕົາໄຟ?
   - ທ່ານເຊື່ອວ່າກະສັດໄດ້ປ່ຽນມາເຊື່ອພຣະເຈົ້າຂອງຊັດຣາກ, ເມຊາກ, ແລະອາເບັດເນໂກບໍ່?
   - ທ່ານຄິດວ່າເຂດຕາເວັນອອກກາງຈະຢູ່ໃນສະພາບໃດ ຖ້າພວກເຂົາເຈົ້າຍັງຮັກສາຄຳສັ່ງຂອງກະສັດເນບູກາດເນັດຊາຢູ່ໃນທຸກວັນນີ້?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

5. ຕອບຕຳຖາມໃນພາກສຸດທ້າຍຂອງບົດຮຽນ (ໃຫ້ຫລາຍຄົນຕອບ).
6. ທ່ານມາຕິນ ລູເທີ ນັກປະຕິຮູບສາສນາຄຣິດໃນສັຕວັດທີ່ສິບຫົກ (Diet of Worms, 1521) ໄດ້ຮັບໂອກາດໃຫ້ໄປແກ້ຕົວ ຫລືປະຕິເສດການປະຕິຮູບຂອງທ່ານຕໍ່ໜ້າຈັກພັດ ແລະເຈົ້າທັງຫລາຍຂອງເຢັຽຣະມັນ; ແຕ່ທ່ານລູເຕີບອກວ່າທ່ານເປັນນັກໂທດຂອງພຣະຄຳ ແລະບໍ່ສາມາດທີ່ຈະປະຕິເສດ. ທ່ານລູເຕີມີຄວາມຢ້ານກົວຈັກພັດ ແຕ່ຄວາມຢ້ານກົວພຣະເຈົ້າຍິ່ງຫລາຍກວ່ານັ້ນ; ທ່ານຢືນຢູ່ກັບຄຳເວົ້າຂອງຕົນ.
7. ເວົ້າວ່າ: ການຕໍ່ຕ້ານຄຣິສຕຽນມີເພີ້ມຂຶ້ນທຸກມື້ໃນປະເທດອະເມຣິກາ, ພວກເຮົາຈະຕ້ອງເລືອກວ່າຈະຢ້ານມະນຸດ ຫລືຢ້ານພຣະເຈົ້າ. ພຣະເຈົ້າສາມາດທີ່ຈະປົດປ່ອຍພວກເຮົາຈາກທຸກສະພາບການ; ພວກເຮົາຈະຕ້ອງເລືອກເອົາການເຊື່ອຟັງເຖິງແມ່ນພຣະເຈົ້າຈະບໍ່ປົດປ່ອຍພວກເຮົາ. ອ້ອນວອນປິດໂດຍຂໍພຣະເຈົ້າຊ່ວຍທຸກໆຄົນໃຫ້ສັດຊື່ຕໍ່ໜ້າການທົດລອງ ແລະຂໍສະຕິປັນຍາໃນກຳຣະນີຕ່າງໆ.

*ສຄ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 8

# ຄວາມຢ້ານທີ່ເກີດຈາກອະຄະຕິ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ໂຢນາ 1: 1-3; 3: 1-5; 4: 1-11

**ພູມຫລັງຂອງພຣະຄັມພີ**: ໂຢນາ 1-4

**ຈຸດສຳຄັນສຳລັບບົດຮຽນນີ້**: ໂຢນາຢ້ານພຣະເຈົ້າຈະຊົງອວຍພຣະພອນພວກສັດຕຣູ.

**ຄຳຖາມເພື່ອຄົ້ນຄວ້າ**: ຄວາມຢ້ານເປັນແຮງດັນອະຄະຕິຂອງຂ້ອຍວິທີໃດ?

**ຈຸດປະສົງຂອງການສຶກສານີ້**: ເພື່ອພິສູດເບິ່ງວ່າຄວາມຢ້ານເປັນແຮງດັນອະຄະຕິຂອງຂ້ອຍວິທີໃດ.

**ອ່ານລວບ**: ໂຢນາສະແດງໃຫ້ພວກເຮົາເຫັນວ່າຄວາມຢ້ານເຮັດໃຫ້ພວກເຮົາເບິ່ງຄົນອື່ນໆ ຜິດ ແລະຍັງເປັນຜົນກະທົບເຣື່ອງການກະທຳຂອງເຮົາກັບພວກເຂົາ. ສິ່ງນີ້ອາດເຮັດໃຫ້ພວກເຮົາບໍ່ໄດ້ຍິນພຣະສຸຣະສຽງ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ໃຫ້ເວລານັກຮຽນບາງຄົນແບ່ງປັນປະສົບການເຣື່ອງ "ອະຄະຕິ." ຖາມ: ທ່ານຮູ້ໄດ້ຕອນໃດວ່າຕົນເອງມີອະຄະຕິກັບຄົນບາງຄົນ ຫລືຄົນບາງກຸ່ມ? ແມ່ນຫຍັງຄືຕົ້ນເຫດຂອງການມີອະຄະຕິໃນຕອນນັ້ນ?
2. ເວົ້າວ່າ: ອະຄະຕິໝາຍເຖິງຄວາມຄິດ ຫລືຄວາມຮູ້ສຶກໃນທາງລົບທີ່ເກີດຂຶ້ນກ່ອນທີ່ໄດ້ຮູ້ຈັກຫລືເຂົ້າໃຈບຸກຄົນຫລືເຫດການ ຄວາມຮູ້ສຶກຫລືຄວາມຄິດແບບຮ້າຍຂາດມັກເກີດຂຶ້ນກັບເຣື່ອງຜິວພັນ, ສັງຄົມ, ຫລືກຸ່ມສາສນາ. ມື້ນີ້ພວກເຮົາຈະຮຽນຮູ້ວ່າຄວາມຢ້ານກົວເຮັດໃຫ້ເກີດມີອະຄະຕິ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອ່ານ ໂຢນາ 1: 1-3 ພຣະຄຳຕອນນີ້ບອກວ່າ ພຣະເຈົ້າຊົງບອກໂຢນາໃຫ້ໄປທີ່ນີເນເວແລະເທສນາຕໍ່ຕ້ານຄວາມຊົ່ວຊ້າຂອງພວກເຂົາ. ອະທິບາຍເບື້ອງຫລັງໂດຍໃຊ້ບົດຮຽນໃນຫົວຂໍ້ "ຄວາມຢ້ານຂອງໂຢນາຖືກເປີດເຜີຍ." ແລ້ວເວົ້າວ່າ ໂຢນາຕັດສິນໃຈປະຕິເສດພຣະເຈົ້າ ແລະແລ່ນໜີໄປຍັງທາຣາຊິດ ຊຶ່ງຢູ່ຄົນລະທິດກັບເມືອງນີເນເວ.
4. ອ່ານ ໂຢນາ 1: 4-2: 10. ສລຸບພຣະທັມຕອນນີ້ແບບສັ້ນໆ ແລ້ວຖາມດັ່ງຕໍ່ໄປນີ້:
   - ໂຢນາແນະນຳລູກເຮືອວິທີເຮັດໃຫ້ພະຍຸເຊົາແນວໃດ?
   - ທ່ານຄິດວ່າເປັນຫຍັງລູກເຮືອຈຶ່ງບໍ່ຢາກເຮັດຕາມຄຳແນະນຳຂອງໂຢນາ?

- ແມ່ນຫຍັງເກີດຂຶ້ນກັບໂຢນາຫລັງຈາກລູກເຮືອໂຍນລາວລົງໃນທະເລ?

5. ອ່ານຄໍາອ້ອນວອນຂອງໂຢນາໃນ ໂຢນາ 2: 1-9. ຖາມ: ທ່ານຄິດວ່ານີ້ແມ່ນຄໍາອ້ອນວອນປະເພດໃດ? ຫລັງຈາກໂຢນາອ້ອນວອນແລ້ວມີຫຍັງເກີດຂຶ້ນກັບລາວ? (ຂໍ້ 10)
6. ແບ່ງນັກຮຽນເປັນສອງກຸ່ມ. ໃຫ້ກຸ່ມທີນຶ່ງອ່ານ ໂຢນາ 3: 1-10 ແລະໃຫ້ກຸ່ມທີສອງອ່ານ 4: 1-10. ໃຫ້ເວລາແຕ່ລະກຸ່ມສລຸບວ່າມີຫຍັງເກີດຂຶ້ນ ແລະໂຢນາຕອບຮັບວິທີໃດ?
7. ຂຽນໃສ່ກະດານວ່າ: "ອະຄະຕິຂອງໂຢນາເກີດມາຈາກ_______? ໃຫ້ໂອກາດນັກຮຽນຕອບ. (ຄໍາຕອບອາດຈະມີ: ຄວາມຢ້ານ, ຄວາມກຽດຊັງ, ຄວາມບໍ່ຮູ້, ຄວາມຮ້າຍ, ຂາດຄວາມຮັກ, ແລະຕໍ່ໆໄປ) ອ່ານໂຢນາ 4: 11 ແລະເວົ້າວ່າ, ໂຢນາໂກດຮ້າຍເພາະລາວສູນເສັຽກົກໄມ້ທີ່ລາວບໍ່ໄດ້ປູກ. ແຕ່ໂຢນາບໍ່ໄດ້ຫ່ວງໃຍຄົນຫລາຍກວ່າ 120, 000 ຄົນທີ່ບໍ່ມີພຣະເຈົ້າໃນເມືອງນີເນເວ ຄໍາຖາມສຸດທ້າຍຂອງພຣະເຈົ້າສໍາລັບໂຢນາ ເປັນຄໍາປະນາມການກຽດຊັງເພາະອະຄະຕິຂອງໂຢນາ: "ແລ້ວເຮົາຄວນບໍ່ທີ່ຈະຕ້ອງມີຄວາມເມດຕາຕໍ່ນີເນເວເມືອງໃຫຍ່ນີ້?"

## <u>ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ເວົ້າວ່າ, ໂຢນາສອນພວກເຮົາເຖິງອັນຕະລາຍທີ່ເກີດຈາກອະຄະຕິສ່ວນຕົວ ເວລາພວກເຮົາຕັດສິນໃຈກ່ຽວກັບເຣື່ອງຕ່າງໆ. ຄວາມຢ້ານກົວໃນສິ່ງທີ່ບໍ່ຮູ້ ຫລືຄຸ້ນເຄີຍ ເຮັດໃຫ້ເຮົາມີອະຄະຕິກັບຄົນອື່ນ. ບາງເທື່ອພວກເຮົາຈໍາຕ້ອງໄດ້ພິສູດຄວາມຢ້ານຂອງຕົວເອງ ແລະກ້າວອອກນອກເຂດທີ່ຄຸ້ນເຄີຍເພື່ອຈະສາມາດເຂົ້າໃຈສິ່ງແວດລ້ອມ. ພຣະເຢຊູຊົງສອນໃຫ້ຮັກສັດຕຣູ. ພວກເຮົາຄວນຮຽນຮູ້ ແລະເຂົ້າໃຈວ່າຄົນອື່ນຄິດແລະປະພຶດຢ່າງໃດ ກ່ອນທີ່ເຮົາຈະມີອະຄະຕິກັບພວກເຂົາ. ຄົນທັງໂລກກໍາລັງຍ້າຍເຂົ້າມາຢູ່ໃນປະເທດເຮົາ; ອະເມຣິກາປະກອບດ້ວຍຄົນທີ່ມາຈາກຫລາຍໆ ປະເທດໃນໂລກ; ພວກເຮົາຄວນຮຽນຮູ້ຊຶ່ງກັນແລະກັນເພື່ອສິ່ງກີດກັ້ນຈະໄດ້ໜ້ອຍລົງ.
9. ພານັກຮຽນຕອບຄໍາຖາມຕໍ່ໄປນີ້:
    - ທ່ານຈະເຮັດຢ່າງໃດເພື່ອຈະຮຽນຮູ້ເຖິງບຸກຄົນທີ່ທ່ານຖືວ່າເປັນສັດຕຣູ?
    - ທ່ານຈະເຮັດແນວໃດເພື່ອຈະເອົາຊະນະອະຄະຕິອັນຍິ່ງໃຫຍ່ທີ່ທ່ານມີຢູ່?
    - ທ່ານຈະຫລີກເວັ້ນອະຄະຕິທີ່ເກີດຂຶ້ນເພາະຄວາມຢ້ານກົວວິທີໃດ?

ພານັກຮຽນອ້ອນວອນຂໍພຣະເຈົ້າໃຫ້ຊ່ວຍເອົາຊະນະອະຄະຕິທີ່ພວກເຂົາເຈົ້າມີຢູ່ໃນຊີວິດ.

*ສຄ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 9

# <u>ຄວາມຢ້ານຈະບໍ່ພຽງພໍ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ລູກາ 12: 22-34

**<u>ພູມຫລັງຂອງພຣະຄັມພີ</u>**: ລູກາ 12: 22-34

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພວກເຮົາສາມາດເຊື່ອວ່າພຣະເຈົ້າຈະຊົງປະທານສິ່ງທີ່ຂາດເຂີນ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ມີຄວາມຕ້ອງການແນວໃດແດ່ທີ່ເຮັດໃຫ້ຂ້ອຍກະວົນກະວາຍ?

**<u>ຈຸດປະສົງຂອງການສຶກສານີ້</u>**: ເພື່ອຮັບຮູ້ວ່າການກະວົນກະວາຍບໍ່ມີປໂຍດ ແລະມີຄວາມໝັ້ນໃຈໃນການຊົງປະທານຂອງພຣະເຈົ້າ.

**<u>ອ່ານລວບ</u>**: ພຣະເຢຊູຊົງໃຊ້ຄວາມຂັດແຍ່ງລະຫວ່າງສອງນ້ອງອ້າຍ ແລະຄຳອຸປມາເຣື່ອງເສດຖີໂງ່ເພື່ອສອນພວກສາວົກໃຫ້ປາສຈາກຄວາມກະວົນກະວາຍ ໂດຍເຊື່ອວາງໃຈໃນພຣະເຈົ້າຫລາຍກວ່າໃນຊັບສົມບັດ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ກ່ອນມື້ຮຽນບົດຮຽນນີ້, ພານັກຮຽນຊອກຫາຮູບພາບທີ່ບອກເຖິງຄວາມຕ້ອງການຂອງມະນຸດທັງຫລາຍເຊັ່ນ: ອາຫານ, ບ້ານເຮືອນ, ເຄື່ອງນຸ່ງ, ສັງຄົມ, ຄວາມຮັກ, ການສຶກສາ, ການໜູນໃຈ, ຄອບຄົວ, ການຂົນສົ່ງ, ແລະຕໍ່ໆໄປ. ຢາຍຮູບໃຫ້ນັກຮຽນຜູ້ລະໃບ, ຫລັງຈາກນັ້ນໃຫ້ແຕ່ລະຄົນຍົກຮູບຂຶ້ນ (ເທື່ອລະຄົນ). ສຳລັບຮູບແຕ່ລະໃບ ໃຫ້ຖາມວ່າ: ຮູບແຜ່ນນີ້ບອກເຖິງຄວາມຕ້ອງການແນວໃດ? ຫລັງຈາກມີຄົນຕອບແລ້ວໃຫ້ສົນທະນາເລັກນ້ອຍ; ຖາມ: ທ່ານມີຄວາມຕ້ອງການແນວໃດແດ່ທີ່ເຮັດໃຫ້ທ່ານຕ້ອງມີຄວາມກະວົນກະວາຍ? ເປັນຫຍັງ?
2. ເວົ້າວ່າ, ຫລາຍຄົນໃນທຸກມື້ນີ້ຢ້ານວ່າຈະບໍ່ພຽງພໍ; ການສຶກສາພຣະຄຳມື້ນີ້ຈະເຕືອນພວກເຮົາໃຫ້ເຊື່ອວາງໃຈໃນພຣະເຈົ້າ ແທນທີ່ຈະວາງໃຈກັບຊັບສົມບັດຂອງໂລກນີ້. ພຣະເຈົ້າຊົງມີພຣະປະສົງທີ່ຈະປະທານສິ່ງທີ່ພວກເຮົາຂາດເຂີນ, ແຕ່ພວກເຮົາຈະຕ້ອງສແວງຫາພຣະອົງກ່ອນແລະໃຫ້ພຣະອົງເປັນທີນຶ່ງໃນຊີວິດ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ເວົ້າວ່າ: ໃນລູກາ 12: 13-21, ພຣະເຢຊູເລີ້ມການສອນໂດຍໃຊ້ຄຳອຸປມາຂອງເສດຖີໂງ່. ກ່ອນເວລາຮຽນຂໍໃຫ້ຜູ້ນຶ່ງອ່ານແລະສຶກສາໄວ້ລ່ວງໜ້າ ແລະພ້ອມທີ່ຈະເລົ່າໃຫ້ນັກຮຽນຄົນອື່ນໆຟັງ. ຫລັງ

ຈາກນັ້ນໃຫ້ເວົ້າວ່າ:   ພຣະເຈົ້າຊົງປະສົງໃຫ້ຄົນທັງຫລາຍຮູ້ວ່າຖ້າພວກເຂົາປ່ອຍໃຫ້ຄວາມກະວົນກະວາຍເປັນເຣື່ອງໃຫຍ່ໃນຊີວິດ ພວກເຂົາຈະພົບຄວາມເຈັບປວດ ຫລືຕາຍ; ແລະຫລາຍກວ່ານັ້ນຄວາມກະວົນກະວາຍຈະເຮັດໃຫ້ພວກເຂົາບໍ່ມີເວລາທີ່ຈະຮັບໃຊ້ພຣະອົງ.

4. ບອກໃຫ້ນັກຮຽນແຕ່ລະຄົນອ່ານ ລູກາ 12: 22-28 ສຳລັບຕົວເອງ; ໃນຂະນະທີ່ພວກເຂົາເຈົ້າກຳລັງອ່ານໃຫ້ຂຽນຄຳຖາມນີ້ໃສ່ກະດານ:
    - ແມ່ນຫຍັງຄືຈຸດສຳຄັນໃນພຣະຄຳຕອນນີ້?
    - ແມ່ນຫຍັງຄືເປົ້າໝາຍເວລາເວົ້າເຖິງ ຝູງນົກ (ກາ), ຊົ່ວຊີວິດຄົນ, ແລະດອກໄມ້ປ່າ?
    - ການມີແຕ່ຄວາມກະວົນກະວາຍນັ້ນບອກເຖິງຫຍັງແດ່ກ່ຽວກັບຄວາມເຊື່ອຂອງພວກເຮົາ?
5. ອ່ານ ລູກາ 12: 29-34 ໃຫ້ທຸກຄົນຟັງ; ຫລັງຈາກນັ້ນໃຫ້ນັກຮຽນຕື່ມບ່ອນວ່າງໃນຂໍ້ຄວາມຕໍ່ໄປນີ້ (ທ່ານອາດຈະຂຽນໃສ່ໂປສເຕີໄວ້ລ່ວງໜ້າ).
    - ຢ່າຫ່ວງໃຍເຣື່ອງ____________ແລະ_____________ ເພາະຄົນທົ່ວໄປໃນໂລກກຳລັງສແວງຫາ ແຕ່ພຣະເຈົ້າຊົງຮູ້ສິ່ງທີ່ພວກເຮົາຂາດເຂີນແຕ່ລະວັນ. (ອາຫານ, ເຄື່ອງດື່ມ)
    - ພວກເຮົາຈະຕ້ອງສແວງຫາ______________ແລະ______________ຂອງພຣະອົງ, ແລະພຣະອົງຈະເພີ້ມສິ່ງເຫລົ່ານີ້ໃຫ້ແກ່ພວກເຈົ້າ. (ພຣະເຈົ້າ, ອານາຈັກສວັນ)
    - ສິ່ງທີ່ທ່ານ_____________ໃນຊີວິດບອກເຖິງສະພາບໃນ____________ຂອງທ່ານ. (ສະສົມ, ຈິດໃຈ)

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ເວົ້າວ່າ: ກະວົນກະວາຍນຳຄວາມຂາດເຂີນແຕ່ລະວັນ ບອກໃຫ້ຮູ້ວ່າຈິດໃຈພວກເຮົາຢູ່ໃສ.  ໂລກນີ້ສອນໃຫ້ແລ່ນນຳຊັບສົມບັດເພື່ອຈະມີຄວາມໝັ້ນຄົງແລະຄວາມສຸກ ພຣະເຢຊູຊົງສອນວ່າພຣະເຈົ້າເທົ່ານັ້ນສາມາດໃຫ້ຄວາມໝັ້ນຄົງແລະສັນຕິສຸກ; ເຄັດລັບຄືໃຫ້ລືມຄວາມກະວົນກະວາຍໂດຍການເຊື່ອວາງໃຈພຣະເຈົ້າໃຫ້ເປັນຜູ້ດູແລພວກເຮົາ. ພວກເຮົາຕ້ອງຕັ້ງໃຈຮັບໃຊ້ ເພາະຮູ້ວ່າພຣະເຈົ້າຈະຊົງດູແລລູກຂອງພຣະອົງ. ຖາມ:
    - ເປັນຫຍັງທ່ານຈຶ່ງກະວົນກະວາຍຫລາຍແທ້?
    - ທ່ານມີແຜນແນວໃດທີ່ຈະເອົາຊະນະຄວາມກະວົນກະວາຍ?
    - ພຣະຄຳໃນມື້ນີ້ ມີຕອນໃດແດ່ທີ່ຍາກຈະເອົາໄປປະຕິບັດ? ເປັນຫຍັງ?
7. ຖາມເພື່ອໜູນໃຈ: 1). ແມ່ນຫຍັງຄືບາດກ້າວທຳອິດທີ່ຈະຊ່ວຍໃຫ້ເຊົາກະວົນກະວາຍ?   2).ຂ້ອຍຈະເຮັດແນວໃດເພື່ອຈະເຊື່ອພຣະເຈົ້າແລະໃຫ້ພຣະອົງດູແລສິ່ງທີ່ຂາດເຂີນປະຈຳວັນ?
8. ອ້ອນວອນປິດການຮຽນ, ຂໍພຣະເຈົ້າຊົງປ່ຽນຈິດໃຈທີ່ເຕັມດ້ວຍຄວາມກະວົນກະວາຍ   ໃຫ້ມາເຊື່ອວາງໃຈວ່າພຣະອົງຈະຊົງປະທານສິ່ງທີ່ຂາດເຂີນໃຫ້.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# <u>ຊົງຊະນະຄວາມຢ້ານ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມັດທາຍ 26:36-46

**<u>ພູມຫລັງຂອງພຣະຄັມພີ:</u>** ມັດທາຍ 21; 26:1-56

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຊົງຢ້ານເມື່ອໃກ້ຈະເຖິງວັນທີ່ພຣະເຢຊູຈະຕ້ອງຕາຍແຕ່ຄຳອ້ອນວອນເຮັດໃຫ້ມີຊັຍຊະນະ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະເອົາຄວາມເຊື່ອຂອງເຮົາຊ່ອຍແນວໃດເມື່ອເຮົາຮູ້ວ່າຈະຕ້ອງທົນທຸກ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອໃຫ້ສະແດງຄວາມສັດຊື່ ແລະຄວາມໄວ້ວາງໃຈພຣະເຈົ້າ.

## <u>ບົດນຳ</u>

1. ບອກນັກຮຽນໃຫ້ເອົາໃຈໃສ່ເປັນພິເສດ ເພາະວ່າບົດຮຽນວັນນີ້ມີຫ້າຫົວຂໍ້ທີ່ຈະສຶກສາກັນ ຫລືບໍ່ດັ່ງນັ້ນບົດຮຽນອາດຈະຕ້ອງແບ່ງເປັນສອງອາທິດກໍເປັນໄດ້.
2. ໃຫ້ນັກຮຽນເປີດພຣະຄັມພີແລ້ວຄ່ອຍຕິດຕາມແຕ່ລະຫົວຂໍ້ຕໍ່ໆກັນໄປຈົນຈົບ.
3. ຄຣູຈະຕ້ອງອ່ານພຣະຄັມພີຈາກມັດທາຍ 21-26 ເພື່ອຄວາມເຂົ້າໃຈກ່ອນສອນ ແຕ່ບົດຮຽນຈະເວົ້າຢ່າງລະອຽດໃນບົດ 26 ເທົ່ານັ້ນ.

## <u>ວັນຖືກຄືງມາໃກ້ແລ້ວ</u> (ມັດທາຍ 21:1-26;46)

ອາທິດສຸດທ້າຍກ່ອນພຣະເຢຊູສິ້ນພຣະຊົນ;

1. ວັນຈັນເປັນວັນທີ່ພຣະອົງຊຳຣະພຣະວິຫານ, " *ພຣະເຢຊູໄດ້ສະເດັດເຂົ້າໄປໃນບໍຣິເວນພຣະວິຫານ ຊົງຂັບໄລ່ບັນດາຜູ້ຊື້ຂາຍໃນບໍຣິເວນພຣະວິຫານນັ້ນອອກເສັຽ ແລະຂວ້ຳໂຕະຜູ້ແລກເງິນກັບທັງບ່ອນຜູ້ຂາຍນົກເຂົາເສັຽ* " (21:12).
2. ຕໍ່ມາໃນວັນອັງຄານແລະວັນພຸດພຣະເຢຊູຊົງເທສນາທີ່ພຣະວິຫານ, ມີຜູ້ຄົນຈຳນວນຫລວງຫລາຍໄດ້ເຂົ້າຟັງຄຳເທສນາຂອງພຣະອົງ (21:18--26:24).
3. ວັນພຣະຫັດຊົງຕັ້ງສິນມະຫາສນິດແລະຖືກຈັບ (26: 26-74).

**<u>ຊົງຮັບປະທານປັສຄາ</u> ( ມັດທາຍ 26:17-35).**

1. ສາວົກຈັດຕຽມບ່ອນຮັປທານເທສການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ (ຂໍ້ 17).
2. ຊົງສັ່ງສາວົກຈັດຕຽມປັສຄາ (ຂໍ້ 18-19)
3. ຊົງທຳນວາຍເຖິງສາວົກຄົນນຶ່ງຈະທໍຣະຍົດພຣະອົງ (ຂໍ້ 20-25).
4. ຊົງປ່ຽນຈາກກິນປັສຄາມາເປັນກິນສິນມະຫາສນິດ ແລະຊົງທຳນວາຍວ່າເປໂຕຈະປະຕິເສດ (ຂໍ້ 26-35).

**<u>ຊົງປະເຊີນຄວາມຢ້ານ</u>  (ມັດທາຍ 26: 36-39).**

1. ຊົງນຳສາວົກໄປອ້ອນວອນແລະສັ່ງສາວົກໃຫ້ນັ່ງລໍຖ້າພຣະອົງ ທີ່ສວນເຄັດເຊມະເນ (ຂໍ້ 36-38).
2. ຄຳອ້ອນວອນຂອງພຣະເຢຊູ (ຂໍ້ 39).

**<u>ຊົງເປົ່າປ່ຽວຢ້ານກົວ</u> (ມັດທາຍ 26: 40-41).**

1. ຊົງກັບຄືນມາຫາສາວົກຄັ້ງທີນຶ່ງເຫັນເຂົານອນຫລັບ (ຂໍ້ 40).
2. ສັ່ງໃຫ້ສາວົກອ້ອນວອນເພື່ອຈະບໍ່ຕົກໃນການທົດລອງ (ຂໍ້ 41).

**<u>ຊົງຊະນະຄວາມຢ້ານ</u> (ມັດທາຍ 26: 42-46).**

1. ຊົງກັບໄປອ້ອນວອນຄັ້ງທີສອງ ແລະກັບຄືນມາຫາສາວົກເຫັນເຂົານອນຫລັບ (ຂໍ້ 42-43).
2. ຄຳອ້ອນວອນຂອງພຣະເຢຊູຄັ້ງທີສອງຂໍ້ 42 ແມ່ນຕໍ່ຈາກຄຳອ້ອນວອນຄັ້ງທີ 1 ຂໍ້  39
3. ຊົງກັບໄປອ້ອນວອນເທື່ອທີສາມ ແລະກັບຄືນມາຫາສາວົກເຫັນເຂົານອນຫລັບ (ຂໍ້ 43).
4. ຊົງກັບໄປອ້ອນວອນເປັນເທື່ອທີສາມ ໂດຍກ່າວຄຳເກົ່າອີກ ຄັ້ງນີ້ແມ່ນພຣະອົງຊົງຊະນະຄວາມຢ້ານ ແລະພ້ອມແລ້ວທີ່ຈະຕາຍຈຶ່ງໄປປຸກພວກສາວົກໃຫ້ລຸກຈາກການນອນຫລັບ (ຂໍ້ 44-46).

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 11
# ບໍ່ກ້າເວົ້າວ່າເຊື່ອພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 22:31-34; 24-62
**ພູມຫລັງຂອງພຣະຄັມພີ:** ລູກາ 22
**ຈຸດສຳຄັນຂອງບົດຮຽນນີ້:** ການທີ່ເຮົາບອກວ່າເຮົາເຊື່ອພຣະເຢຊູອາດເສັຽຄ່າບາງຢ່າງ.
**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະເສັຽຄ່າອັນໃດເມື່ອເຮົາບອກວ່າເຮົາເຊື່ອພຣະເຢຊູ?
**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຮົາກ້າບອກຜູ້ອື່ນວ່າເຮົາເຊື່ອພຣະເຢຊູໃນທຸກສະພາບການ.

## ບົດນຳ

1. ເລີ້ມດ້ວຍເລົ່າເຣື່ອງນາງ ເອເຊັຽ ໃນບົດນຳຂອງບົດຮຽນ 11 ຫລັງຈາກນັ້ນໃຫ້ໂອກາດນັກຮຽນປະມານຫ້ານາທີ່ສົນທະນາເຣື່ອງນາງເອເຊັຽ.
2. ຖາມນັກຮຽນວ່າ ເມື່ອທ່ານໄປຫາສະມາຄົມ ຫລືໄປປະເທດລາວ ພີ່ນ້ອງຂອງທ່ານມີຄຳເຫັນແນວໃດທີ່ທ່ານເຊື່ອພຣະເຢຊູ? ແລະທ່ານຢືນໝັ້ນຄົງຕໍ່ຄວາມເຊື່ອແນວໃດ?

## ພຣະເຢຊູຊົງຮູ້ເຮົາດີ (ລູກາ 22:31-34).

1. ເວົ້າເຖິງເຮົາຮູ້ຈັກລູກຂອງເຮົາ ແລະພຣະເຈົ້າຮູ້ຈັກເຮົາດີທີ່ສຸດ.
2. ໃນແລງວັນພະຫັດພຣະເຢຊູຊົງແຕ່ງຕັ້ງສິນມະຫາສນິດ ພຣະອົງໄດ້ກ່າວທຳນວາຍເຖິງເປໂຕຈະປະຕິເສດພຣະອົງ, ພຣະອົງຊົງຮູ້ວ່າເປໂຕຈະສອບບໍ່ຜ່ານ
3. ຊາຕານໄດ້ຂໍທົດສອບສາວົກທຸກຄົນ ແຕ່ພຣະເຢຊູອ້ອນວອນຂໍໄວ້ ດັ່ງນັ້ນຜູ້ທີ່ຖືກທົດສອບແມ່ນພຣະເຈົ້າຊົງອະນຸຍາດ ຄືພຣະອົງໄດ້ໃຫ້ມານທົດສອບທ່ານໂຢບ (ໂຢບ 1:6-12)
4. ຊົງບອກເປໂຕຢ່າງແຈ້ງວ່າ " *ກ່ອນໄກ່ຂັນທ່ານຈະປະຕິເສດວ່າບໍ່ຮູ້ຈັກເຮົາເຖິງສາມເທື່ອ* " (ຂໍ້ 34).

## ຢູ່ໃນວົງລ້ອມຂອງຜູ້ບໍ່ເຊື່ອ (ລູກາ 22:54–55).

1. ເມື່ອເຂົາຈັບພຣະເຢຊູໄປນັ້ນ ເປໂຕແລະໂຢຮັນກໍຕິດຕາມໄປ ແຕ່ເປໂຕຕິດຕາມຫ່າງໆ ສ່ວນໂຢຮັນເຂົ້າໄປໂລດ ເພາະຮູ້ຈັກກັບປະໂຣຫິດດີ.

2. ເປໂຕໄປນັ່ງຜີງໄຟນຳຄົນບໍ່ເຊື່ອທັງໝົດ ລາວຈຶ່ງມີຄວາມຮູ້ສຶກບໍ່ເປັນຕົວຂອງຕົວເອງ (ຢ້ານ).
3. ຖາມນັກຮຽນວ່າ ຫາກທ່ານຢູ່ໃນສພາບເປໂຕ ທ່ານຈະຕັ້ງໂຕແນວໃດ? ຕົວຢ່າງໄປລາວ ຢູ່ກັບຍາດພີ່ນ້ອງທີ່ບໍ່ເຊື່ອ ທ່ານໄດ້ເຮັດແນວໃດ? ໄດ້ເປັນພະຍານບໍ່?

## <u>ປະຕິເສດຕັ້ງຫລາຍເທື່ອ</u> (ລູກາ 22:56-60).

1. ເປໂຕ ປະຕິເສດພຣະເຢຊູຄັ້ງທີ 1 " *<u>ຄົນຜູ້ນັ້ນຂ້ອຍບໍ່ຮູ້ຈັກ</u>* ". (ຂໍ້ 57).
2. ເປໂຕປະຕິເສດພຣະເຢຊູຄັ້ງທີ 2 " *<u>ຊາຍເອີຍ, ບໍ່ແມ່ນດອກ</u>* " (ຂໍ້ 58).
3. ເປໂຕປະຕິເສດພຣະເຢຊູຄັ້ງທີສາມ "*<u>ຊາຍເອີຍ, ເຣື່ອງທີ່ມຶງເວົ້ານັ້ນກູບໍ່ຮູ້ຈັກ</u>* " (ຂໍ້ 60).
4. ເວົ້າຍ້ອນຫລັງຄຳສັນຍາຂອງເປໂຕ "*ນາຍເອີຍ, ຂ້ານ້ອຍພ້ອມແລ້ວທີ່ຈະໄປກັບທ່ານ ເຖິງຈະຕິດຄຸກຫລືຕາຍກໍດີ* " (ຂໍ້ 33).
5. ເຊີນນັກຮຽນສົນທະນາຄຳສັນຍາຂອງເປໂຕ. 1. ຕົວຢ່າງລູກເວົ້າວ່າ ຈະລ້ຽງພໍ່ແມ່ຕອນເຖົ້າແກ່ ເຮົາຈະດີໃຈ ຫລືບໍ່ດີໃຈ? 2. ສົນທະນາວ່າ ຕອນເປໂຕສັນຍານັ້ນແມ່ນລາວເວົ້າແຕ່ປາກບໍ່ ຫລືລາວເວົ້າຈາກໃຈ?

## <u>ເສັຽໃຈແລະເລີ້ມຕົ້ນໃໝ່</u> (ລູກາ 22:61-62).

1. ໃນຂະນະໄກ່ຂັນນັ້ນພຣະເຢຊູຊົງຫລຽວເບິ່ງເປໂຕ ແລະເປໂຕກໍສົບຕາກັບພຣະອົງ (ຂໍ້ 61) ສົນທະນາກັບນັກຮຽນ;
    1) ເປັນຫຍັງພຣະເຢຊູຈຶ່ງຫລຽວເບິ່ງເປໂຕ? ຫລືວ່າພຣະອົງຢາກເວົ້າຫຍັງບໍ່?.
    2) ເມື່ອເປໂຕສົບສາຍຕາກັບພຣະເຢຊູແລ້ວລາວຄິດແນວໃດ?

2. ແລ້ວເປໂຕກໍອອກໄປຂ້າງນອກຮ້ອງໃຫ້ເປັນທຸກໃຈນັ້ນ ສົນທະນາກັບນັກຮຽນລາວເປັນຫຍັງຈຶ່ງຮ້ອງໄຫ້ແລະເປັນທຸກໃຈ? " *ແລ້ວເປໂຕກໍອອກໄປຂ້າງນອກຮ້ອງໄຫ້ ເປັນທຸກໃຈໜັກ* " (ຂໍ້ 62).

3. ບອກນັກຮຽນວ່າ ການຫ້ອງໄຫ້ເສັຽໃຈຂອງເປໂຕເຮັດໃຫ້ລາວກັບໃຈເລີ້ມຕົ້ນໃໝ່ "*ຜູ້ໃດໂສກເສົ້າກໍເປັນສຸກ* " (ມັດທາຍ 5:4). ທີ່ພຣະເຢຊູເທສນານັ້ນແມ່ນຖືກກັບເປໂຕຢ່າງຄັກແນ່.

4. ຊັກຊວນນັກຮຽນຫລັບຕາ, ກົ້ມໜ້າ ກ່ອນອ້ອນວອນ, ໃຫ້ນັກຮຽນຄິດເຫັນຕອນຕົນເອງປະຕິເສດພຣະເຢຊູ
    1) ທາງວາຈາ ໄດ້ປະຕິເສດພຣະອົງ.
    2) ການກະທຳ ເຊັ່ນ; ຂາບໄຫວ້ພຣະທຽມ, ເຮັດການຝ່າຍມືດຕ່າງໆ ສິ່ງເຫລົ່ານີ້ລ້ວນເປັນການຜິດບາບເຮົາຄວນເສັຽໃຈທີ່ໄດ້ເວົ້າ ຫລືເຮັດ ແລ້ວກັບໃຈຄືເປໂຕເສັຽ.

*ທວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 12
# ຢ້ານຄວາມຕາຍ

---

| | |
|---|---|
| **ຂໍ້ພຣະຄັມພີສຳລັບບົດຮຽນນີ້:** | 1ໂກຣິນໂທ 15:50-58 |
| **ພູມຫລັງຂອງພຣະຄັມພີ:** | 1ໂກຣິນໂທ 15 |
| **ຈຸດສຳຄັນຂອງບົດຮຽນນີ້:** | ເພາະວ່າພຣະເຢຊູຊົງຄືນພຣະຊົນ, ຜູ້ທີ່ເຊື່ອກໍຄືນມາຈາກຕາຍຈຶ່ງບໍ່ຢ້ານຄວາມຕາຍ. |
| **ຄຳຖາມເພື່ອການຄົ້ນຄວ້າ:** | ເປັນຫຍັງຜູ້ເຊື່ອຈະຕ້ອງຕາຍ ແຕ່ມີຄວາມຫວັງ? |
| **ຈຸດປະສົງຂອງບົດຮຽນ:** | ເພາະວ່າພຣະເຢຊູຊົງຊະນະຄວາມຕາຍ, ຂ້ອຍຈຶ່ງມີຄວາມຫວັງ. |

## ບົດນຳ

ຄຣິສຕຽນຈະເວົ້າວ່າບໍ່ຢ້ານຕາຍ ແຕ່ບໍ່ໄດ້ໝາຍຄວາມວ່າຄຣິສຕຽນພາກັນຢາກຕາຍ ທັງນີ້ກໍເພາະຄຣິສຕຽນເຂົ້າໃຈວ່າການຕາຍເປັນການໄປຮັບຊີວິດໃໝ່ໃນຟ້າສວັນ, ແຕ່ຍັງມີຫລາຍຄົນຍັງຢ້ານຕໍ່ການຕາຍ ເພາະເຂົາບໍ່ເຂົ້າໃຈວ່າຕາຍໄປແລ້ວຈະໄປຢູ່ໃສ? ຄຣິສຕຽນໃນເມືອງໂກຣິນໂທກໍພາກັນຫວຸ້ນວາຍສັບສົນ ເພາະເຂົາໄດ້ຍິນຄະນະອື່ນຫລືພວກຄຣູສອນປອມ ໄດ້ສອນໃນເມືອງໂກຣິນໂທວ່າບໍ່ມີການຄືນມາຈາກຕາຍດ້ວຍເຫດນີ້ພຣະຄັມພີ 1ໂກຣິນໂທ 15 ຈຶ່ງເປັນຄຳຕອບ ແລະຄຳເລົ້າໂລມຄຣິສຕຽນວ່າການຄືນມາຈາກຕາຍນັ້ນເປັນຄວາມຈິງ.

## ການຄືນມາຈາກຕາຍນັ້ນສຳຄັນຍິ່ງ (1ໂກຣິນໂທ 15).

1. ຈະມີການຟື້ນພຣະຊົນຫລືບໍ່ນັ້ນໂປໂລຕອບໃນ 1ໂກຣິນໂທ 15: 1-35
2. ເມື່ອຄືນມາແລ້ວຈະມີກາຍແນວໃດ 1ໂກຣິນໂທ 15:35-51
3. ຄົນທີ່ຍັງມີຊີວິດຢູ່ໃນວັນພິພາກສາ 1ໂກຣິນໂທ 15:51-57
4. ຄຳເລົ້າໂລມຂອງອັຄສາວົກໂປໂລ 1ໂກຣິນໂທ 15: 58

**<u>ການຄືນພຣະຊົນເຮັດໃຫ້ເຮົາເໝາະກັບສວັນ</u>** **(1ໂກຣິນໂທ 50-53).**

1. ກາຍຂອງມະນຸດທັມມະດາ ຈະເຂົ້າແຜ່ນດິນສວັນບໍ່ໄດ້ (ຂໍ້ 50).
2. ໂປໂລເປີດເຜີຍຂໍ້ເລິກລັບ (ຂໍ້ 51)
3. ສຽງແກເປັນສຽງສັນຍານປຸກໃຫ້ລຸກຊື່ອພິບຕາ (ຂໍ້ 52).
4. ການທີ່ເນົ່າເປື່ອຍບໍ່ເໝາະກັບສວັນ ແຕ່ການຝ່າຍວິນຍານນັ້ນເໝາະກັບສວັນ (ຂໍ້ 53).
5. ສຽງແກເປັນເໝືອນສັນຍານໃນການປຸກໃຫ້ຕື່ນຂອງຄົນທີ່ເຊື່ອໃນພຣະເຢຊູຄຣິດໃຫ້ກັບມາມີຊີວິດອີກ. ມີພຣະຄັມພີບາງຕອນໄດ້ເວົ້າເຣື່ອງເປົ່າແກມີຢູ່ໃນ ເອຊາຢາ 27:13; ໂຢເອນ 2:1; ເຊຟັນຢາ 1:14-16; ເຊຂາຣີຢາ 9:14 ແລະໃນພຣະຄັມພີໃໝ່ມີຢູ່ໃນ ມັດທາຍ 24:31; 1ເທຊະໂລນິກ 4:16.

**<u>ການຄືນພຣະຊົນເຮັດໃຫ້ເຮົາຢາກຮັບໃຊ້</u>** **(1ໂກຣິນໂທ 15:58).**

1. ຄຳເລົ້າໂລມໃຫ້ຢືນໝັ້ນຄົງຕໍ່ຫລັກຄວາມເຊື່ອ, ເພາະວ່າພວກຜູ້ສອນປອມຈະມາບອກວ່າບໍ່ມີການຟື້ນມາຈາກຕາຍ ດັ່ງທີ່ຄຣູສອນປອມໃນເມືອງໂກຣິນນັ້ນ. ຫລືອາດມີລາງຄົນມາບອກວ່າ ສວັນບໍ່ມີ, ນະຣົກບໍ່ມີ ເຂົາຈະເອົາເຫດຜົນມາອ້າງຕ່າງໆນາ ທ່ານຢ່າເຊື່ອຟັງເຂົາ ຈົ່ງຍຶດໝັ້ນຕໍ່ຄວາມເຊື່ອ.

2. ຈົ່ງປະຕິບັດງານຂອງອົງພຣະຜູ້ເປັນເຈົ້າທີ່ມອບໝາຍໃຫ້ຈົນສຳເຣັດທຸກປະການ.

3. ຄຣູອາດຈະຖາມນັກຮຽນວ່າງານອັນໃດທີ່ພຣະເຈົ້າມອບໝາຍໃຫ້ທ່ານ? ເຣື່ອງນີ້ ໃຫ້ນັກຮຽນເວົ້າອອກມາໃນສິ່ງທີ່ລາວເຂົ້າໃຈ ແຕ່ບໍ່ແມ່ນເວົ້າແບບຮອມໆ. ຫາກນັກຮຽນບໍ່ເຂົ້າໃຈຫລືບໍ່ສາມາດວົ້າໄດ້ຄວນໃຫ້ລາວອ້ອນວອນວ່າພຣະເຈົ້າໃຫ້ລາວເຮັດຫຍັງ?

4. ການງານຂອງເຮົາຈະບໍ່ໄຮ້ປໂຍດ ແປວ່າສິ່ງໃດກໍຕາມທີ່ທ່ານໄດ້ເຮັດໃນພຣະນາມຂອງພຣະເຢຊູ ພຣະເຈົ້າຊົງເຫັນໝົດທຸກຢ່າງ ແລ້ວພຣະເຈົ້າຈະຕອບສນອງຕາມສິ່ງທີ່ທ່ານໄດ້ເຮັດນັ້ນ. ດ້ວຍເຫດນີ້ເຮົາທັງຫລາຍຈະຕ້ອງເຮັດງານຂອງພຣະເຈົ້າດ້ວຍຄວາມປິຕິຍິນດີ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# <u>ຢ້ານການເປັນພະຍານ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ກິຈການ 4:1-22

**<u>ພູມຫລັງຂອງພຣະຄັມພີ:</u>** ກິຈການ 3-4

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະວິນຍານບໍຣິສຸດຈະນຳພາໃນການເປັນພະຍານ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮັດແນວໃດເຮົາຈຶ່ງຈະບໍ່ຢ້ານໃນການເປັນພະຍານ.

**<u>ຈຸດປະສົງຂອງບົດຮຽນ:</u>** ໃຫ້ໄວ້ວາງໃຈໃນພຣະວິນຍານນຳພາ.

## <u>ບົດນຳ</u>

ທຸກຄົນຍ່ອມມີຄວາມຢ້ານເປັນຂອງທັມມະດາ, ແຕ່ວ່າຄວາມຢ້ານທຸກຢ່າງສາມາດຝຶກຫັດໃຫ້ຫາຍໄປໄດ້. ວັນນີ້ເຮົາຈະຮຽນເຣື່ອງສາວົກພຣະເຢຊູກໍຢ້ານ ແຕ່ເມື່ອຖືກສິດສອນແລະເຂົ້າໃຈແລ້ວຈຶ່ງກາຍເປັນຄົນກ້າ.

### <u>ຜົນຂອງຄຳພະຍານ ພາກ 1:</u> ໂມໂຫ ແລະ ຄວາມເຊື່ອ (ກິຈການ 4:1-4).

1. ເລົ່າເຣື່ອງຄຣິສຕຽນຢ້ານ ຫລືບໍ່ກ້າໃນການປະກາດຂ່າວປະເສີດ, ແລ້ວເປີດໂອກາດໃຫ້ນັກຮຽນອອກຄຳເຫັນ: ຢ້ານອັນໃດແດ່...ຫາກມີຄົນຕອບວ່າບໍ່ຢ້ານ, ເຊີນໃຫ້ລາວເວົ້າສັ້ນໆເທື່ອໃດເປັນຄັ້ງຫລ້າສຸດທີ່ລາວ ປະກາດ? ໃຫ້ລາວເລົ່າລາວເລີ້ມຕົ້ນແນວໃດ? ເພິ່ນຕອບແນວໃດ?

2. ເວົ້າເຣື່ອງການເປັນຄຣິສຕຽນ ຫລືເປັນສາວົກ ເປໂຕ ແລະໂຢຮັນມີສີ່ຢ່າງໃນບົດຮຽນມີອັນໃດແດ່?

3. ສາວົກເປໂຕ ແລະໂຢຮັນເຮັດແນວໃດ? ວ່າແນວໃດກັບຊາຍງ່ອຍ (ກິຈການ 3: 19).

4. ສິ່ງທີ່ເປໂຕກັບໂຢຮັນໄດ້ເຮັດນັ້ນໄດ້ເຮັດໃຫ້ຜູ້ໃດຂຸ້ນເຄືອງໃຈ? ຖາມນັກຮຽນເປັນຫຍັງເຂົາຈຶ່ງເຄືອງ ແລະໃຈຮ້າຍຈົນຈັບ ເປໂຕກັບໂຢຮັນ ໄປຂັງຄຸກ?

### <u>ອຳນາດຄຳພະຍານ:</u> ໂດຍພຣະວິນຍານ (ກິຈການ 4:5-12).

1. ເລົ່າເຣື່ອງຄຣິສຕຽນຜູ້ບໍ່ກ້າ ແລະຖາມນັກຮຽນ ເປັນຫຍັງທ່ານເອງຈຶ່ງບໍ່ກ້າໃນເມື່ອກ່ອນ?

2. ເປັນຫຍັງເປໂຕຈຶ່ງປະຕິເສດພຣະເຢຊູຕັ້ງສາມເທື່ອ (ອ່ານມັດທາຍ 26:69-75).

3. ເລົ່າເຣື່ອງຫລັງເປໂຕກັບຄືນໄປຫາປາຕາມອາຊີບເດີມແລ້ວ ພຣະເຢຊູໄປນຳເອົາລາວແນວໃດ? ບອກແລະຖາມນັກຮຽນວ່າເປັນຫຍັງລາວຈຶ່ງເຂັ້ມແຂງແລະກ້າຫານຫລາຍກວ່າແຕ່ກ່ອນ (ອ່ານໂຢຮັນ 21:1-19).

4. ເລົ່າເຣື່ອງເຂົາຈັບເປໂຕ ແລະໂຢຮັນດ້ວຍເຣື່ອງໃດ ກິຈການ 3: 19 ໃນຖານະສ້າງຄວາມຫວຸ້ນວາຍໃນພຣະຫານວິຫານ.

5. ເມື່ອເຂົາສືບຖາມເປໂຕກັບໂຢຮັນນັ້ນ ເຂົາຫວັງໃຈວ່າທັງສອງບໍ່ມີຄຳຕອບ ເພາະທັງສອງເປັນຄົນບໍ່ມີການສຶກສາ ແຕ່ສາວົກຕອບຄຳຖາມດ້ວຍຣິດເດດພຣະວິນາຍານ ເຮັດໃຫ້ເຂົາງຶດງໍ້ຈົນປາກບໍ່ອອກ.

6. ເປໂຕແລະໂຢຮັນຖືໂອກາດປະກາດຂ່າວປະເສີດໃນຂໍ້ 12 (ອ່ານຂໍ້ 12).

## <u>ຜົນຂອງຄຳພະນານ ພາກ 2:</u> ຊູ່ເຂັນ ແລະ ເລົ້າໂລມ (ກິຈການ 4:13–22).

1. ເຂົາປຶກສາກັນ ແລະຕົກລົງຫ້າມບໍ່ໃຫ້ສາວົກທັງສອງປະກາດ ເຣື່ອງພຣະເຢຊູຄຣິດ ຂໍ້ 15-17
2. ຄຳໃຫ້ການແບບການເປັນພະຍານຂອງເປໂຕແລະໂຢຮັນ ຂໍ້ 19-20 ແລະຊັກຊັກຊວນໃຫ້ບັນດາພວກເຖົ້າແກ່, ພວກນັກທັມ, ພວກມະຫາປະໂຣຫິດ ແລະກາຍະຟາ ມະຫາປະໂຣຫິດຕົນໃຫຍ່ ໄດ້ພິຈາຣະນາ ຂໍ້ 19-20.

3. ຂໍ້ 19-20 ເປັນຫລັກສາສນາຂອງຜູ້ເຊື່ອຈະຕ້ອງປະຕິບັດໃນທຸກສາສານາ, ດ້ວຍເຫດນີ້ຈຶ່ງເວົ້າໄດ້ວ່າສາວົກທັງສອງໄດ້ກ່າວເຖິງຫລັກສາສນາສາດອັນເລີກແລບ ຈົນພວກເຖົ້າແກ່, ພວກນັກທັມ, ພວກມະຫາປະໂຣຫິດ ແລະກາຍະຟາ ມະຫາປະໂຣຫິດຕົນໃຫຍ່ ປລາດໃຈ.

4. ພວກເຂົາໄດ້ປ່ອຍສາວົກທັງສອງ ເພາະເຫັນແກ່ພົລເມືອງທີ່ຢືນຢູ່ທີ່ນັ້ນ ພ້ອມກັບຊາຍງ່ອຍທີ່ຍ່າງໄດ້ນັ້ນຢູ່ເປັນພະຍານແຫ່ງຄວາມຈິງ. (ຂໍ້ 21-22).

*ຫວ*